ໂຣມນິທານກວດສອບ

550



# ນາງນ້ອຍ
# ຂີ້ຄວງເຄີຍ

# SHELL WORKS HERE

PROMOTING EDUCATION FOR NATIONAL DEVELOPMENT

Education is essential in the achievement of a better way of life for everyone.

Shell contributes towards the promotion of education in various forms and at all levels.

Shell shares its resources and expertise with educational organisations and Shell's books and films are known worldwide.

Shell is proud to be playing a part in the development of Lao P.D.R.

Societe Shell Du Laos Tel. 214142, 212842

ໂຮມນິທານກວດສອບ

# ນາງນ້ອຍໃນດວງເດືອນ

ພິມຄັ້ງທີ I

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ສປປ ລາວ
ວຽງຈັນ 1995

( ສະຫງວນລິຂະສິດ)

ຮັບຜິດຊອບການພິມຈຳໜ່າຍ : ຈັນທີ ເດືອນສະຫວັນ

<u>ຄະນະຈັດທຳ</u>

- ບຸນຊູ ຜົນທະວີໄຊ
- ເຫລົາຄຳ ເພັດຈຳພອນ
- ພິມດີດ,ຈັດໜ້າ ນາງວິລະວັນ,ສີສະຫວາດ
- ແຕ້ມໜ້າປົກ ຄຳເພັດ

ທ.ບ . **໙໙໔໑/ພທປ໐໖໐໙໙໕**

ພິມທີ່ໂຮງພິມວຽງຈັນ

ຈຳນວນ 1.000 ຫົວ

ຂະໜາດ 13 × 19 ຊມ

# ຄຳນຳ

ເພື່ອເປັນການອານຸລັກຮັກສາວັນນະຄະດີພື້ນເມືອງລາວເຊິ່ງສະແດງເຖິງຂະນົບທຳນຽມຮີດຄອງປະເພນີອັນດີງາມຂອງທຸກຊົນຊາດຊົນເຜົ່າໃນ ລາວໄວ້ໃຫ້ຮຸ່ນລູກ, ຮຸ່ນຫລານ ໄດ້ສຶກສາຄົ້ນຄວ້າຮ່ຳຮຽນແລະເພື່ອຮັກສາໄວ້ ຊຶ່ງມູນມໍລະດົກວັດທະນະທຳບໍ່ໃຫ້ເສື່ອມສູນໄປຕາມການເວລາ.

ດ້ວຍຫລິງເຫັນຄຸນຄ່າແລະຄວາມສຳຄັນດັ່ງກ່າວ ທາງສຳນັກພິມແລະ ຈຳໜ່າຍປຶ້ມແຫ່ງລັດຈຶ່ງ ໄດ້ຈັດໃຫ້ມີຂັ້ນກວດສອບນິທານພື້ນເມືອງແລະເລື່ອງສຳລັບເດັກນ້ອຍ, ແລ້ວຄັດຈ້ອນທ້ອນໂຮມນິທານປາກເປົ່າແລະເລື່ອງສັ້ນຂອງຊົນຊາດຊົນເຜົ່າໃນລາວມາຈັດພິມເປັນປຶ້ມໂຮມນິທານພື້ນເມືອງຊຸດ: "ນາງນ້ອຍໃນດວງເດືອນ" ໂດຍໄດ້ຮັບການອຸປະຖຳດ້ານທຶນຮອນໃນການຈັດພິມຈາກ ບໍລິສັດແຊນແຫ່ງປະເທດລາວ.

ປຶ້ມຫົວດັ່ງກ່າວນີ້ມີເນື້ອໃນເວົ້າເຖິງຂະນົບທຳນຽມ, ຮີດຄອງປະເພນີແລະວັດທະນະທຳອັນດີງາມຂອງທຸກຊົນຊາດຊົນເຜົ່າໃນລາວມີຄຸນຄ່າໃຫ້ແກ່ ຄົນຮຸ່ນລູກ, ຮຸ່ນຫລານ ໄດ້ອ່ານ, ໄດ້ສຶກສາຄົ້ນຄວ້າຮ່ຳຮຽນຕໍ່ໄປ.

ການຈັດພິມຄັ້ງນີ້ ເປັນຄັ້ງທຳອິດຖ້າມີຂໍ້ຂາດຕົກບົກພ່ອງປະການໃດ ກະລຸນາ ທ່ານຜູ້ອ່ານແລະຜູ້ຮູ້ທັງຫລາຍຈົ່ງສົ່ງຄຳຕຳນິຕິຊົມໄປຍັງສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ ໂທລະສັບ : 212473, 212474 ຕູ້ປ.ນ. 1300 ວຽງຈັນ.

ວຽງຈັນ, ວັນທີ 1/9/1995

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

ສ.ປ.ປ.ລາວ

# ນົກເຈົ່າໄດ້ຜົວແມວ

– ສົມຄິດ ຄູນນາວົງ

ແຕ່ປາງກ່ອນຍັງມີຄູ່ຜົວເມຍຄູ່ໜຶ່ງທີ່ຢູ່ນຳກັນຢ່າງມີຄວາມສຸກແຕ່ມີ ສາຍເລືອດແລະເຊື້ອຊາດແຕກຕ່າງກັນຢ່າງຂາດຂັ້ນ. ເຊິ່ງຜູ້ເປັນຜົວແມ່ນ ເຊື້ອຊາດແມວແລະຜູ້ເປັນເມຍຊ້ຳພັດແມ່ນເຊື້ອຊາດນົກທີ່ເຄີຍບິນເວີ່ນຢູ່ກາງ ເວຫາ, ຄົງເປັນເພາະຟ້າລິຂິດ ພົມບັນດານໃຫ້ທັງສອງຮັກກັນຈົນກ້າວໄປ ເຖິງບ່ອນສົມຫວັງ, ແມວສຸດທີ່ພາກພູມໃຈທີ່ໄດ້ເມຍເປັນນົກແລະທະນຸຖະໜອມຮັກແພງປານແກ້ວຕາດວງໃຈ. ຄືນໃດກໍອອກໄປຫາໜູ, ປາແລະສັດອື່ນໆມາ ສູ່ເມຍກິນບໍ່ໄດ້ຂາດສ່ວນຜູ້ເປັນເມຍຊ້ຳພັດຄິດວ່າຕົນເອງກໍເປັນນົກທີ່ສວຍງາມ ມີປີກອັນແຂງແຮງບິນໄປໃສກໍໄດ້ຕາມໃຈຊອບແຕ່ພັດມາໄດ້ຜົວເປັນແມວທີ່ ມີຮູບຮ່າງຂີ້ຮ້າຍແນວນີ້. ເຊິ່ງແຕ່ລະມື້ມີແຕ່ນອນເວັນກໍເລີຍໜ້າອາຍ ຕໍ່ໝູ່ເພື່ອນທີ່ມີຜົວແຕ່ຜູ້ງາມໆ. ຍ້ອນຄວາມອາຍດັ່ງກ່າວຢູ່ມາວັນໜຶ່ງຜູ້ເປັນ ເມຍກໍຕັດສິນໃຈຫາວິທີຈະໜີຈາກຜົວໃຫ້ໄກແສນໄກ ເພາະຖ້າຜົວນຳທັນຜົວ ຄົງຈະຂ້າແນ່ນອນ.

ຫ່ຽງຂອງວັນຕໍ່ມາໃນຂະນະທີ່ຜົວກຳລັງນອນກິນຢ່າງມີຄວາມສຸກເພື່ອກາງ ຄືນຈະອອກຫາກິນມາສູ່ເມຍຢ່າງທີ່ເຄີຍກະທຳຢູ່ທຸກຄືນພໍໄດ້ໂອກາດດີ ນາງ ນົກເຈົ່າກໍບິນຈາກຜົວໄປຢ່າງໄວວາ. ທັງບິນທັງຄິດໃນໃຈວ່າ: ເມກ(ຂີ້ເຟື້ອ) ຄົງຈະເກັ່ງແລະຢູ່ສູງກວ່າໝູ່. ເຮົາຕ້ອງບິນໄປຂໍຢູ່ນຳເມກ(ຂີ້ເຟື້ອ)ໃຫ້ ໄດ້

ຄິດແລ້ວກໍ່ບິນໄປຫາເມກ (ຂີ້ເຟື້ອ) ໂງ່ນໃຫຍ່ທັນທີ.

ພໍໄປຮອດກໍ່ອ້ອນວອນຂໍຄວາມຊ່ວຍເຫລືອວ່າ:

- ອ້າຍເມກ (ຂີ້ເຟື້ອ ) ນ້ອງຂໍຢູ່ນຳແດ່.

- ເຈົ້າມາແຕ່ໃສ? ເມກຖາມດ້ວຍຄວາມຕົກໃຈ.

- ນ້ອງຫນີປະພົວມາ. ຄິດວ່າອ້າຍເກັ່ງແລະຢູ່ສູງຄົງຈະຊ່ວຍເຫລືອ ນ້ອງໄດ້.

- ເມກ (ຂີ້ເຟື້ອ ) ຢູ່ສູງກໍ່ຈິງອ້າຍກໍຍັງຢ້ານແຕ່ລົມແນວດຽວ. ເພາະລົມພັດພາໄປທາງໃດອ້າຍຕ້ອງໄປທາງນັ້ນ. ອ້າຍຄິດວ່າ: ໃຫ້ນ້ອງໄປອາໃສຢູ່ນຳລົມພຸ້ນສາ ຈຶ່ງຈະປອດໄພ. ເວົ້າແລ້ວນົກເຈົ່າກໍບິນໄປຫາລົມທັນທີ.

ພໍໄປເຖິງນົກເຈົ່າກໍອ້ອນວອນຂໍຄວາມເມດຕາຢ່າງເຄີຍ. ແຕ່ລົມຊ້ຳ ພັດຕອບວ່າ: ຢູ່ນຳຂ້ອຍກໍໄດ້ເພາະຂ້ອຍກໍເກັ່ງຈົນພັດພາທຸກສິ່ງທຸກຢ່າງໄປ ໄດ້ແຕ່ຂ້ອຍກໍຍັງຢ້ານໂພນແນວດຽວເພາະພັດແນວໃດກໍ່ບໍ່ເປ່ເພຈັກເທື່ອ.

ຟັງແລ້ວນາງນົກເຈົ່າກໍບິນຫນີຈາກລົມໄປຫາໂພນຢ່າງຟ້າວຟັ່ງ. ຄິດວ່າອາໃສໂພນຄົງຈະປອດໄພກ່ວາ. ພໍໄປເຖິງກໍ່ອ້ອນວອນຢ່າງທີ່ເຄີຍທຳຜ່ານ ມາແລ້ວໂພນຈຶ່ງຕອບວ່າ: ຢູ່ນຳຂ້ອຍກໍ່ໄດ້ແຕ່ບໍ່ປອດໄພປານໃດເພາະວ່າ ຂ້ອຍບໍ່ແພ້ຄວາຍ ເຊິ່ງແຕ່ລະມື້ມີແຕ່ຄວາຍມາຊົນຂ້ອຍຈົນເພພັງໄປຫມົດ.

ນີ້ເບິ່ງແມ! ໂພນຊີ້ໃສ່ຕົນທີ່ເຈື່ອນຍ້ອນຄວາຍຊົນ.

ຍ້ອນຄວາມຢ້ານນາງນົກເຈົ່າຈຶ່ງບິນໄປຫາຄວາຍທີ່ກິນຫຍ້າຢູ່ຕາມທົ່ງ ໄວວາ. ເມື່ອໄປຮອດກໍ່ອ້ອນວອນຂໍຄວາມຊ່ວຍເຫລືອເຊັ່ນເດີມ ພໍໄດ້ຟັງຄຳຮ້ອງຂໍດັ່ງກ່າວຄວາຍຈຶ່ງຕອບວ່າ:

ຢູ່ນຳຂ້ອຍກໍໄດ້ແຕ່ຄວາມປອດໄພແມ່ນບໍ່ຮັບປະກັນປານໃດເພາະຂ້ອຍກໍຍັງຢ້ານເຊືອກຫນັງເຊິ່ງມັດຂ້ອຍໄວ້ແຕ່ລະມື້. ດີແທ້ໃຫ້ເຈົ້າໄປອາໃສຢູ່ນຳ ຫນັງ

ພຸ້ນສາ.

ມາຮອດຕອນນີ້ນົກເຈົ້າກໍ່ຍິ່ງກະວົນກະວາຍໃຈເພາະຢ້ານຕົນເອງຈະ ບໍ່ປອດໄພ ຄິດແລ້ວຈຶ່ງບິນໄປຮອງຂໍຄວາມຊ່ວຍເຫລືອຈາກເຊືອກໜັງ ດ້ວຍຄວາມຈິງໃຈ. ໜັງຈຶ່ງສະແດງທ່າທີທີ່ເກັ່ງກ້າວ່າ: ສັດທຸກຊະນິດຂ້ອຍມັດ ຢູ່ໝົດຊາຫຍັງແຕ່ຄວາຍ. ຖ້າເຈົ້າຢ້ານຫລາຍຢູ່ນຳຂ້ອຍກໍໄດ້. ແຕ່ຂ້ອຍກໍ ຍັງຢ້ານສັດແນວດຽວເຊິ່ງໂຕຂອງມັນນ້ອຍໆ.

- ຢ້ານສັດອີ່ຫຍັງອີກອ້າຍ! ນົກເຈົ້າຖາມດ້ວຍຄວາມຮ້ອນໃຈ.

- ຢ້ານແຕ່ໜູແນວດຽວເພາະໜູກັດອ້າຍຂາດທຸກເທື່ອ.

ພໍໄດ້ຟັງຄຳເວົ້າຂອງໜັງນາງນົກເຈົ້າກໍບິນໜີໄປດ້ວຍຄວາມອອນ ເພຍຄວາມຕັ້ງໃຈວ່າຈະນີບ່ອນອາໃສຄົງຈະມືດມົນລົງທຸກເມື່ອ.

ພໍໄປຮອດໜູຈຶ່ງອ້ອນວອນດ້ວຍສຽງແຫບແຫ້ງແລະເມື່ອຍລ້າວ່າ:

- ອ້າຍໜູນ້ອງຂໍຢູ່ນຳອ້າຍແດ່! ເພາະເຂົາຊ່າວ່າອ້າຍເກັ່ງ.

- ເຈົ້າມາແຕ່ໃສ? ໜູຖາມດ້ວຍທ່າທີອັນເຄັ່ງຂຶມ.

- ນ້ອງໜີປະຜົວມາ!

- ຜົວເຈົ້າແມ່ນໃຜ ! ໜູຖາມຄືນຄ້າຍກັບວ່ານັກສືບ.

- ຜົວຂອງນ້ອງແມ່ນແມວ, ພໍໄດ້ຍິນຄຳວ່າ " ແມວ " ໜູກໍ່ຕົກສະ ເງີ້ ໄປຊົ່ວໄລຍະໜຶ່ງຈຶ່ງຕັ້ງໂຕໄດ້. ກໍເລີຍສະແດງທ່າທີອັນເກັ່ງກ້າເພື່ອ ລົບຄວາມຢ້ານກົວດັ່ງກ່າວວ່າ : ຊາຫຍັງສັດປະເພດອື່ນໆແຕ່ເຊືອກໜັງ ມັດຮອດຊ້າງ, ມ້າ, ຄວາຍ. ອ້າຍກໍຍັງກັດຂາດ.

ພໍໄດ້ຍິນແນວນັ້ນ ນາງນົກເຈົ້າກໍດີໃຈຈົນບອກບໍ່ຖືກທັງຕົ້ນທັງດຶກ ຄິດວ່າຕົນເອງຕ້ອງປອດໄພແນ່ນອນ.

ແຕ່ແລ້ວໜູກໍເອີ່ຍປາກຕໍ່ນົກເຈົ້າອີກວ່າ: ອ້າຍເກັ່ງກໍຈິງແຕ່ກໍຍັງຢ້ານແມວ

ໃດ້ນອງ. ເພາະແຕ່ລະຄືນມັນເລາະຄຸບເອົາໝູ່ຂອງອ້າຍໄປກິນເປັນອາຫານຂອງມັນ ອ້າຍບໍ່ກ້າຮັບເອົານ້ອງດອກຢ້ານບໍ່ປອດໄພ. ດີແທ້ໃຫ້ໄປອາໃສຢູ່ ນຳແມວພູ້ນສາ.

ໃນທີ່ສຸດນາງນົກເຈົ້າຜູ້ໜີປະຜົວກໍໄດ້ກັບຄືນມາຢູ່ນຳຜົວເຊັ່ນເດີມ.

ເມື່ອໄດ້ໂອກາດດີຜູ້ເປັນຜົວຈຶ່ງສັ່ງສອນວ່າ :

ນ້ອງເອີຍບໍ່ມີໃຜດອກຈະເກັ່ງ. ແຕ່ຖ້າເຮົາຫາກຮູ້ຈັກສາມັກຄີຊ່ວຍ ເຫລືອກັນໃນຖານະຜົວດຽວເມຍດຽວແລ້ວອຸປະສັກທຸກຢ່າງຄືງຈະລຸລ່ວງໄປດ້ວຍ ດີ ແລະຈະສາມາດເອົາຊະນະສັດຕູທຸກໂຕໄດ້ຢ່າງແນ່ນອນ.

ເມື່ອໄດ້ຟັງຄຳເວົ້າແນວນັ້ນນາງນົກເຈົ້າກໍໃຈອ່ອນຍອມຮັບຄວາມຜິດພາດ ແລະຮັກກັບແມວຕາບຊົ່ວນິລັນ.

24/VII
ຫ້າມຈຳໜ່າຍ

# ທ້າວໝາກແຕງສຸກ

– ຣຽວອາຈູນ ແດນວິໄລ

ແຕ່ກີ້ແຕ່ກ່ອນ ມີສອງຜົວເມຍເຖົ້າ ຢູ່ນຳກັນມາໄດ້ຫລາຍປີຫາລູກຊິ ມາຊ່ອຍງານ ຫາຫລານຊິມາຊ່ອຍວຽກກໍ່ບໍ່ມີ.

ແຕ່ລະມື້ ສອງເຖົ້າ ເຮັດສວນປູກໝາກແຕງເບິ່ງແຍງສວນດອກໄມ້ ໃຫ້ພະຍາຫາກິນພໍກຸ້ມມື້ກຸ້ມວັນ.

ຢູ່ມາມື້ໜຶ່ງ ສອງຜົວເມຍເຖົ້າ ພາກັນເຂົ້າໄປໃນວັງ ເພື່ອເອົາ ຮອດດອກໄມ້ໄປຖວາຍ ນາງ ມາລາ ລູກສາວພະຍາ ຕາມທີ່ເຄີຍເຮັດມາ ທຸກໆວັນສິນ. ເມື່ອກັບມາຮອດຕູບນ້ອຍຂອງຕົນສອງເຖົ້າກໍ່ແປກໃຈ.

- ແມ່ນໃຜມາແຕ່ງພາເຂົ້າໄວ້ຖ້ານໍ? ພໍ່ເຖົ້າເວົ້າຂຶ້ນ.
- ແມ່ນໃຜມາແຕ່ງພາງາຍໄວ້ຕ້ອນນໍ? ແມ່ເຖົ້າເວົ້າ.

ແລ້ວສອງເຖົ້າ ກໍເອົາຂອງກິນເຫລົ່ານັ້ນໄປຖອກຖິ້ມ ເພາະຢ້ານມີຜູ້ ມາເບື່ອ.

ຈາກນັ້ນມາ ວ່າແຕ່ສອງເຖົ້າອອກຈາກສວນໄປໃສ ພໍແຕ່ກັບຄືນມາກໍ ຈະເຫັນພາເຂົ້າຖືກຈັດແຈ່ງແຕ່ງໄວ້ມີທັງຂອງຫວານຂອງຄາວ.

ມື້ໜຶ່ງ...

- ເຖົ້າເອີຍ! ຟືນດັງຂອງເຮົາໝົດແລ້ວໄດ! ແມ່ເຖົ້າເວົ້າ
- ຄັນຊັ້ນພວກເຮົາພາກັນໄປຕັດຟືນຢູ່ປ່າພຸ້ນເທາະ! ພໍ່ເຖົ້າຊວນ

ສອງເຖົ້າທຳທ່າອອກຈາກສວນໄປແລ້ວຈຶ່ງຈອບກັບຄືນມາຄອຍເບິ່ງຢູ່ໃກ້ໆ ຕູບຂອງຕົນ.

ທັນໃດນັ້ນ ສອງເຖົ້າເຫັນຫນ່ວຍຫມາກແຕງ ຢູ່ເຄືອໃກ້ຕູບນັ້ນຄ່ອຍໆໃຫຍ່ຂຶ້ນແລ້ວມີຊາຍຫນຸ່ມຮູບງາມລອຍອອກມາ ແລະເຂົ້າໄປໃນຕູບ.

ສອງເຖົ້າຟ້າວແລ່ນໄປຫາຫນ່ວຍຫມາກແຕງພໍ່ເຖົ້າເງືອດພ້າວ່າຈະຟັນ.

– ພໍ່ເອີຍ ແມ່ເອີຍ ຢ່າຟັນ! ຫາກພໍ່ຟັນ ລູກຕ້ອງຕາຍນ້ອຍ ລູກຍັງນ້ອຍ ບໍ່ທັນເຖິງຍາມອອກຈາກຫມາກແຕງ ລູກຂໍອາສາແຕ່ງພາແລງ ພາງາຍ ໃຫ້ພໍ່ແມ່ ຄັນຫມາກແຕງແກ່ສຸກແລ້ວຈຶ່ງຟັນ.

– ໃຫ້ລູກອອກມາຢູ່ນຳພໍ່ແມ່ສາ! ແມ່ເຖົ້າເວົ້າ

– ລູກອອກມາຢູ່ນອກບໍ່ທັນໄດ້ດອກ ເວລາໃດຫມາກແຕງສຸກແລ້ວລູກ ຈຶ່ງຈະອອກມາໄດ້ ຖ້າພໍ່ແມ່ຫາກຟັນຫມາກແຕງຕອນນີ້ລູກກໍ່ຈະຕາຍ ບໍ່ໄດ້ຢູ່ນຳ ພໍ່ກັບແມ່ອີກ.

ພໍ່ເຖົ້າບໍ່ຟັນຫມາກແຕງ ຫມາກແຕງບໍ່ຖືກພໍ່ເຖົ້າຟັນ ຊາຍງາມບໍ່ຕາຍນ້ອຍ ຍັງເປັນລູກຊາຍນ້ອຍຢູ່ໃນຫມາກແຕງ ຍາມຄ່ຳແລງອອກມາຮ້ອຍດອກ ໄມ້ ຊ່ອຍແມ່ເຖົ້າ.

ວັນສິນຕໍ່ມາ ສອງເຖົ້າໄດ້ເອົາຮວດດອກໄມ້ທີ່ຊາຍງາມຮ້ອຍໃຫ້ໄປຖວາຍນາງມາລາລູກສາວພະຍານາງມີຄວາມພໍອົກພໍໃຈຫລາຍເພາະບໍ່ເຄີຍເຫັນໃຜຮ້ອຍດອກໄມ້ງາມປານນີ້ຈັກເທື່ອ.

– ແມ່ເຖົ້າເອີຍ ແມ່ນໃຜນໍ ເປັນຜູ້ຮ້ອຍດອກໄມ້ນີ້?

– ທ້າວຫມາກແຕງສຸກລູກຊາຍແມ່ເອງ ແມ່ເຖົ້າບອກ.

ລູກສາວພະຍາໄດ້ຍິນແນວນັ້ນ ກໍຢາກເຫັນຫນ້າ ທ້າວຫມາກ ແຕງສຸກນາງຈຶ່ງຂໍລາພໍ່ໄປຊົມສວນ.

ນາງມາລາ ພ້ອມດ້ວຍສາວສະໜົມເລາະຊົມສວນດອກໄມ້ ແລ້ວໄປ ແວ່ ຕູບຂອງສອງເຖົ້າຈຳສວນ.

- ລູກຊາຍແມ່ໄປໃສ ? ນາງຖາມ

- ລູກຊາຍແມ່ໄປເອົາຟືນເດິກດື່ນທ່ຽງຄືນ ຈຶ່ງຈະກັບມາຮອດ, ແມ່ ເຖົ້າ ຕອບ

ລູກສາວພະຍາ ຖ້າຈົນຄ່ຳຈຶ່ງກັບເມືອວັງ.

ນາງມາລາບໍ່ເຫັນທ້າວໝາກແຕງສຸກ ແຕ່ທ້າວໝາກແຕງສຸກ ເຫັນນາງ ມາລາ ເຫັນແລ້ວຢູ່ບໍ່ໄດ້ ນອນບໍ່ຫລັບ ຄິດເຫັນໜ້າຈ້ອຍໆ ເພາະອາຍ ບ່າວ ນ້ອຍບໍ່ເຄີຍ ເຫັນໃຜງາມປານນາງມາລາ.

- ແມ່ເອີຍ ພໍ່ເອີຍ! ໄປຂໍລູກສາວພະຍາໃຫ້ລູກແດ່.

- ລູກມາຊ່າງເວົ້າແທ້ ຈັກໜ້ອຍພະຍາຊິຂັບໄລ່ພວກເຮົາໜີໄດ! ພໍ່ເຖົ້າ ເວົ້າ ແຕ່ທ້າວໝາກແຕງສຸກ ອ້ອນວອນຫລາຍຫລົບຫລາຍຕ່າວ ສອງ ເຖົ້າ ຈຶ່ງກົ້ມໜ້າກົ້ມຕາ ໄປຂໍລູກສາວພະຍາ.

ສ່ວນພະຍາ ເມື່ອຮູ້ວ່າ ສອງເຖົ້າເຝົ້າສວນ ມາຂໍລູກສາວ ກໍ່ຢາກ ຮ້າຍ ຈຶ່ງຄາດຄ່າດອງເປັນຄວາຍຮ້ອຍ ງົວຮ້ອຍ ເງິນຮ້ອຍຊັ່ງ ຄຳຮ້ອຍຊັ່ງ ເພື່ອ ບໍ່ໃຫ້ລູກສາວຂອງຕົນ ຕົກໄປເປັນໃພ້ຂອງຄົນຂີ້ທຸກ.

ສອງເຖົ້າກັບຄືນມາເລົ່າຄວາມຈິງສູ່ລູກຟັງ ດ້ວຍຄວາມໝົດຫວັງແຕ່ທ້າວ ໝາກແຕງສຸກເວົ້າວ່າ:

-ບໍ່ຍາກດອກ ມື້ອື່ນເຊົ້າລູກຊິໄປຄ້າ ໃຫ້ພໍ່ກັບແມ່ ເອົາລູກໄປຝາກ ນຳ ນາຍສະເພົາ ແຕ່ເຊົ້າໆເນີ.

ມື້ໃໝ່ມາ ສອງເຖົ້າໄດ້ໂຈມເອົາໝາກແຕງໄປຫານາຍສະເພົາ

- ຂໍຝາກລູກຊາຍໄປຄ້ານຳແດ່! ແມ່ເຖົ້າເວົ້າ

– ໝາກແຕງນີ້ຫວະຊິໄປຄ້າໄປຂາຍ? ນາຍສະເພົາຖາມ

– ແມ່ນແລ້ວ ! ພໍ່ເຖົ້າຕອບ

ຄົນຢູ່ໃນສະເພົາຜູ້ໃດກໍ່ຫົວຂວັນ ທຳອິດນາຍສະເພົາ ກໍ່ບໍ່ຢາກຮັບແຕ່ຍ້ອນສອງເຖົ້າອ້ອນວອນຫລາຍ ນາຍສະເພົາຈຶ່ງຮັບເອົາໝາກແຕງໃສ່ສະ ເພົາໄປນຳ.

ພໍໄປຮອດເຄິ່ງດອນແຫ່ງໜຶ່ງ ທ້າວໝາກແຕງສຸກ ຖາມວ່າ

– ຮອດໃສແລ້ວ?

ເຫັນໝາກແຕງປາກເປັນ ຄົນໃນສະເພົາຕື່ນຕົກໃຈ ທັງຢ້ານທັງສົ້ນພວກເຂົາຈຶ່ງເອົາໝາກແຕງໂຍນຖິ້ມລົງໃສ່ດອນນັ້ນ.

ເມື່ອຕົກລົງໄປຮອດດິນແລ້ວ ໝາກແຕງກໍ່ໃຫ່ຍຂຶ້ນ ໃຫ່ຍຂຶ້ນ ແລ້ວ ທ້າວໝາກແຕງສຸກກໍ່ອອກມາຈາກໝາກແຕງ ລາວຖອດແຫວນອອກຈາກມື ແລ້ວອະທິຖານເອົາຈົກເອົາຊ້ວານມາເຮັດ ສວນປູກໝາກແຕງ ຈົນເຕັມດອນ.

ສ່ວນນາຍສະເພົາໄປຄ້າໄດ້ເງິນໄດ້ຄຳຈົນເຕັມສະເພົາ ພໍມາຮອດ ເຄິ່ງດອນບ່ອນທ້າວໝາກແຕງສຸກຢູ່ກໍ່ເຫັນສວນໝາກແຕງ ຈຶ່ງແວ່ເບິ່ງ ເຫັນໝາກແຕງສຸກເຕັມດອນ ຈົນເກືອບບໍ່ມີບ່ອນປ່ອນຕີນຍ່າງ ພໍເຫັນເຈົ້າ ຂອງສວນກໍ່ຖາມຊື້ໝາກແຕງ.

– ຂາຍເທື່ອໜ່ວຍ ຮ້ອຍບໍ່ຂາຍ ຄັນຂໍກິນດາຍພໍໄດ້ຢູ່. ທ້າວໝາກ ແຕງສຸກບອກນາຍສະເພົາແລ້ວກໍ່ປິດເອົາໝາກແຕງມາຜ່າໃຫ້ກິນ.

ເມື່ອໄດ້ຊີມໝາກແຕງ ທັງຫວານທັງຫອມ ບໍ່ເຄີຍມີໝາກແຕງຢູ່ໃສແຊບທີ່ ນາຍສະເພົາຈຶ່ງຕົກລົງຊື້ໝາກແຕງໝົດສວນ ໃນລາຄາ ຄວາຍຮ້ອຍງົວຮ້ອຍ ຄຳຮ້ອຍຊັ່ງ ເງິນຮ້ອຍຊັ່ງແລ້ວຂົນໝາກແຕງຂຶ້ນສະເພົາ ສ່ວນ ທ້າວໝາກແຕງສຸກ ຂໍເອົາໝາກແຕງໜ່ວຍດຽວ ກັບເມືອຫາພໍ່ກັບແມ່ ສ່ວນ

ຄວາຍງົວ ເງິນຄຳນັ້ນ ໃຫ້ນາຍສະເພົາໃຊ້ຫລັງຈາກຂາຍໝາກແຕງໝົດ.

ເມື່ອໄປຮອດໃນເມືອງແລ້ວ ນາຍສະເພົາເອົາໝາກແຕງໄປເລາະຂາຍໃຫ້ຊາວບ້ານ ໃຜໄດ້ກິນກໍ່ຕິດໃຈ ຍາດກັນຊື້.ນາຍສະເພົາຈຶ່ງໄດ້ເງິນ ຄຳຫລາຍ ແລ້ວກໍເອົາໄປຊື້ຄວາຍ ຊົ້ງົວ ແລະແບ່ງເອົາເງິນຄຳ ມາໃຫ້ ທ້າວໝາກແຕງສຸກ.

ພໍເຖິງມື້ນັດໝາຍ ສອງເຖົ້າຈຳສວນກໍເອົາຄ່າສິນສອດທັງໝົດ ໄປມອບໃຫ້ພະຍາ.ຄັນພະຍາຖາມຫາລູກເຂີຍ ສອງເຖົ້າກໍ່ຊີ້ໃສ່ໝາກແຕງສຸກໜ່ວຍໜຶ່ງ ທີ່ເອົາມານຳ ພະຍາໃຈຮ້າຍຫລາຍພວມຊິຈັບເອົາໝາກແຕງໂຍນຖິ້ມແຕ່ນາງມາລາຫລຽວເຫັນໝາກແຕງທັງກ້ຽງທັງງາມ ທັງຫອມເປັນຕາແພງຈຶ່ງຟ້າວໄປຍາດເອົາ ແລ້ວເອົາໄປໄວ້ໃນຫ້ອງນອນຂອງຕົນ.

ຕົກກາງຄືນມາ ພໍນາງມາລານອນຫລັບ ໝາກແຕງສຸກກໍ່ໃຫ່ຍຂຶ້ນ ໃຫ່ຍຂຶ້ນ ແລ້ວມີຊາຍຮູບງາມ ອອກມາປຸກນາງມາລາ.

ພໍແຕ່ແນມເຫັນທ້າວ ນາງມາລາ ຈົນຕາຄ້າງ ເພາະນາງບໍ່ເຄີຍ ເຫັນຊາຍໃດງາມປານຊາຍຄົນນີ້ ນາງຖາມວ່າ.

- ອ້າຍເປັນໃຜ ມາຈາກໃສ?

- ອ້າຍຊື່ທ້າວໝາກແຕງສຸກ ເປັນລູກຊາຍຂອງຄົນຈຳສວນ ອ້າຍ ອອກມາແຕ່ໃນໜ່ວຍໝາກແຕງ.

ທຳອິດນາງມາລາບໍ່ເຊື່ອ ທ້າວໝາກແຕງສຸກຈຶ່ງກັບເຂົ້າໄປໃນ ໜ່ວຍໝາກແຕງ.

- ເຊື່ອແລ້ວ ລະ ! ອອກມາສາບາດນີ້.ນາງມາລາເວົ້າ.

ສວຍໂອກາດ ເວລາທ້າວໝາກແຕງສຸກອອກມາ ນາງມາລາຟ້າວ ຈັບເອົາໝາກແຕງ ໂຍນອອກທາງປ່ອງຢ້ຽມ.

ຕັ້ງແຕ່ນັ້ນມາ ທ້າວໜຸ່ມກແຕງສຸກກັບ ນາງມາລາ ກໍ່ຢູ່ຮ່ວມກັນຢ່າງ ມີຄວາມສຸກຖືກຕ້ອງຕາມປະເພນີ.

# ນາງນ້ອຍໃນດວງເດືອນ

-ມ. ໄພວັນ

ແຕ່ກີ້ແຕ່ກ່ອນ, ໃນປ່າຕຶບດົງໜາແຫ່ງໜຶ່ງຊຶ່ງມີສັດປ່ານາໆພັນອາໃສ ຢູ່ຮ່ວມກັນຢ່າງມີຄວາມສຸກ ແຕ່ຍັງມີສິ່ງໜຶ່ງທີ່ເຮັດໃຫ້ຝູງສັດນ້ອຍໃຫຍ່ ທັງຫລາຍລໍຄອຍນັ້ນ ກໍຄືສຽງເພງປະຫລາດ, ທຸກໆຄືນເດືອນເພັງ ສຽງເພງປະຫລາດນີ້ຈະດັງກ້ອງໄປທົ່ວປ່າດົງພົງໄພ ຝູງສັດທັງຫລາຍຈຶ່ງຖືວ່າ ຄືນ ນັ້ນແມ່ນຄືນແຫ່ງຄວາມສຸກ ແລະຄືນແຫ່ງປາງບຸນໃຫຍ່ສຳລັບສິ່ງທີ່ມີຊີວິດທັງປວງບໍ່ພຽງແຕ່ຝູງສັດນາໆພັນທີ່ອາໃສຢູ່ໃນບໍລິເວນແຫ່ງນັ້ນ ຕະຫລອດຮອດຕົ້ນໄມ້ໃບຫຍ້າເມື່ອໄດ້ຟັງສຽງເພງປະຫລາດນັ້ນກໍຍັງເອນອ່ຽງ ແອ່ນນາວໄປຕາມຈັງຫວະຂອງສຽງເພງ...

ຕຸ່ນ, ໜູ, ງູ, ຈີ່ລໍ່... ທີ່ມີເຮືອນຢູ່ໃຕ້ດິນກໍປີ້ລໍຫົວອອກມາອ້າປາກ ຕາກເຫືອກ ແລະບາງເທື່ອກໍໂດດເຕັ້ນໄປນຳຈັງຫວະສຽງເພງ.

ແມ່ເຜິ້ງ, ແມງກະເບື້ອ, ຕັກແຕນ, ແມງຈີ່ນູນ... ທີ່ພວມຈະຫລັບນອນ ກໍຊວາດຕື່ນລຸກຂຶ້ນພືປີກແອ່ນຟ້ອນອ້ອມເຮືອນຮັງ.

ແຂ້ປາກຍາວ, ປາດຸກ, ປາຄໍ່ກັ້ງ, ປາໂດ, ກຸ້ງທີ່ອາໃສຢູ່ໃນນ້ຳກໍປີ້ລໍຫົວແລ້ວລອຍເຂົ້າມາຫາແຄມຝັ່ງຟົ້ນເຜືອກັນໄປມາຈົນຫ້ວຍນ້ຳເກີດມີຄື້ນຟອງ...

ຊ້າງ, ເສືອໂຄ່ງ, ໝູປ່າ, ໝາໄນ, ກວາງ, ຟານ, ກະຕ່າຍ... ກໍແລ່ນເຮັດຫູຊັນຫີ່ລີ້ ທີ່ລີ້ ອອກມາຈາກຖ້ຳ, ຮູໂຫວ ແລະພົງຮາກໄມ້ໃຫຍ່, ສິ່ງສຽງ

ຮ້ອງໂຮສັກຄະໂຍງໂຄງເຄງດ້ວຍຄວາມມ່ວນຊື່ນ.

ລື່ນ ຄ່ອຍໆນາຍຕົວອອກ ແລ້ວປ່ອນຫົວອອກຈາກໂກນກົກໄມ້ຄານໄປ ຫາ ສຽງເພັງ.

ເຕົ່າກໍ່ຄ່ອຍໆປ່ອນຫົວອອກມາຈາກກອງ ແລ້ວຄານກ່ອນເກາະກ່ອນ ກ້ອຍ ຕາມຫລັງລື່ນໄປ...

ໃນຂະນະທີ່ຝູງສັດທັງຫລາຍພວມຟ້ອນລຳມ່ວນຊື່ນຢູ່ກັບສຽງເພັງປະຫລາດ ນັ້ນກໍມີນາງນ້ອຍຮູບງາມຜູ້ໜຶ່ງປະກົດຂຶ້ນຢູ່ເທິງໂງ່ນຫີນບ່ອນມີນ້ຳຕົກ ຕາດ ຈາກຈອມຜາ, ອ້ອມຕົວນາງນ້ອຍມີແສງລັດສະໝີເປັ່ງປະກາຍແຈ້ງຄື ດວງ ຕາເວັນ, ນາງນ້ອຍຄົນນັ້ນພວມສີຊໍ, ຮ້ອງເພັງ ແລະແອ່ນຟ້ອນໄປນຳ, ຝູງສັດ ນ້ອຍໃຫຍ່ເຫັນແນວນັ້ນກໍອ້າປາກຕາກເຫືອກມືນຕາເຫລືອກໂລ້ຍ້ອມຮູບ ຮ່າງ ງົດງາມຂອງນາງນ້ອຍຄົນນັ້ນ, ເຂົາເຈົ້າຈຶ່ງເຂົ້າໄປໃກ້ນາງນ້ອຍ ແລ້ວຈັບ ມື ເກາະຕ່ອງກັນຕີເປັນວົງມົນອ້ອມຕົວນາງນ້ອຍແລ້ວກໍພ້ອມກັນຮ້ອງ ເພັງ ແອ່ນຟ້ອນ ອັນເຮັດໃຫ້ບັນຍາກາດທົ່ວປ່າດົງພົງໄພເຕັມໄປດ້ວຍຄວາມ ສຸກ ຄວາມມ່ວນຊື່ນ, ສັດທັງຫລາຍກໍຮັກແພງກັນຄືຢູ່ໃນຄອບຄົວອັນດຽວກັນ.

ແຕ່ທັນໃດນັ້ນ, ເຫດການປະຫລາດກໍເກີດຂຶ້ນ, ທ້ອງຟ້າທີ່ເຄີຍແຈ່ມໃສຂາວ ນວນຈາກແສງສະຫວ່າງຂອງໝູ່ດາວ ແລະດວງເດືອນກໍມືດຄຶ້ມເຂົ້າ, ກ້ອນ ເຝື້ອໃຫຍ່ເທົ່າພູເຂົາກໍລອຍມາປົກຄຸມບໍລິເວນແຫ່ງນັ້ນ ແລະບົດບັງປ່າ ດົງ ວົງກົດຈົນມືດມົວບໍ່ຮູ້ວ່າໃຜເປັນໃຜ, ເຫດການອັນລາຫົນກໍເກີດຂຶ້ນ, ບໍ່ດົນທ້ອງ ຟ້າກໍຄ່ອຍຮຸ່ງແຈ້ງອອກ, ແຈ້ງອອກຈົນເມກໝອກຫາຍໄປ ແລະເຫດການນັ້ນ ກໍງຽບສະຫງົບລົງ ຄົງເຫລືອແຕ່ຄວາມຫວ່າງເປົ່າຂອງລາຕີການ, ສຽງເພັງ ປະຫລາດກໍຫາຍໄປ, ນາງນ້ອຍຮູບງາມນັ້ນກໍຫາຍໄປນຳ ຝູງສັດປ່າທັງຫລາຍ ຕ່າງກໍພາກັນຊອກ ແລະເອີ້ນຫາ ແຕ່ກໍພົບກັບຄວາມຜິດຫວັງອັນເຮັດໃຫ້ເຂົາ

ເຈົ້າມີຄວາມໂສກເຫງົາປ່ຽວພອຍເປັນທີ່ສຸດ.

ຕັ້ງແຕ່ນັ້ນເປັນຕົ້ນມາ ປ່າດົງວົງກົດກໍ່ບໍ່ມີສຽງເພັງ, ບໍ່ມີປາງບຸນ ໃຫ່ຍ ແລະຄືນແຫ່ງຄວາມສຸກ ນອກຈາກສຽງຄື້ນຄວນຈາກນ້ຳຕົກຕີນຜາ ແລະສຽງ ລົມປ່າທີ່ພັດຕົ້ນໄມ້ໃບຫຍ້າ ດົນໆຈະມີສຽງແຜດຮ້ອງຂອງສັດທີ່ຫາກິນຢູ່ ຕາມ ຮ່ອມຫ້ວຍພູເຂົາ ນອກຈາກກະຕ່າຍປ່າເທົ່ານັ້ນທີ່ເຂົ້າໃຈວ່າ ນາງນ້ອຍ ຮູບ ງາມຜູ້ນັ້ນຖືກພະຍາ ດວງຈັນລັກພາຕົວໄປໃນຄືນນັ້ນ ເພາະຢູ່ໃນວົງ ເດືອນ ຈະມີຮູບຄົນພວມນັ່ງສີຊໍຮ້ອງເພງ, ສະນັ້ນ, ນັບຕັ້ງແຕ່ນັ້ນເປັນຕົ້ນມາຍາມຄ່ຳ ຄືນເດືອນເພັງ ພະຈັນເຕັມດວງກະຕ່າຍຈະອອກໄປຢູ່ກາງທົ່ງຫຍ້າແຫງນ ຄໍ ຂຶ້ນຈ້ອງແນມເບິ່ງດວງຈັນ ແລະແນມເບິ່ງຄືແນວນັ້ນຈົນມາເຖິງເທົ່າທຸກ ວັນ ນີ້...

# ກຳພ້າປາຫລົດ

– ສົມຄິດ ຄູນນາວົງ

ຢູ່ບ້ານແຫ່ງຫນຶ່ງຍັງມີເດັກກຳພ້າທີ່ອາໃສຢູ່ນຳແມ່ເຖົ້າໆ ເຊິ່ງພໍ່ຂອງ ເຂົາໄດ້ຕາຍຈາກໄປແຕ່ເຂົາຍັງນ້ອຍໆພຸ້ນ ຍ້ອນສະພາບແວດລ້ອມຂອງຄອບ ຄົວເປັນຄືແນວນັ້ນ ຈຶ່ງເປັນເຫດໃຫ້ເຂົາຕ້ອງທຸ້ມເທເຫື່ອແຮງແລະສູ້ມທຸກສະ ຕິປັນຍາເພື່ອຫາລ້ຽງແມ່ ເຖິງຢ່າງໃດເຂົາກໍຂໍເປັນລູກທີ່ກະຕັນຍູຕໍ່ແມ່ຕະຫລອດເວລາ ຂໍພຽງແມ່ມີຄວາມສຸກທຸກຢ່າງແມ່ນເຂົາຍອມທຳໄດ້, ວັນເວລາ ຜ່ານກາຍມື້ນີ້, ມື້ຫນ້າແລະມື້ຕໍ່ໆ ໄປທີ່ເຂົາພາກພຽນລ້ຽງແມ່ທີ່ແສນເຄົາລົບ.

ພໍຕົກຄືນຫນຶ່ງຂອງກາງເດືອນຈຽງສຽງເຕີນຈາກພໍ່ບ້ານກໍດັງຂຶ້ນເປັນ ແຕ່ລະຈຸດ ເພື່ອໃຫ້ລູກບ້ານຮູ້ວ່າ: ມື້ອື່ນເປັນມື້ລົງກອນຫນອງໃຫຍ່ຂອງບ້ານ ສະເຫນີໃຫ້ລູກບ້ານຄອບຄົວລະຫນຶ່ງຄົນກຽມເຂົ້າ, ແຫ, ມອງ... ໄປແຕ່ເຊົ້າ ໆ ເພື່ອເອົາປາຂຶ້ນມາກິນລ້ຽງສະຫລອງຜົນສຳເລັດນາປີທີ່ຜ່ານມາ, ພໍທ້າວ ກຳພ້າກັບມາແຕ່ຫາເຍືອງຂຽດແມ່ຈຶ່ງເວົ້າຕໍ່ທ້າວວ່າ: ລູກເອີຍ! ມື້ອື່ນເຊົ້າ ໃຫ້ລູກໄປກອນຫນອງນຳເພິ່ນເດີ. ຖ້າບໍ່ໄປຢ້ານເພິ່ນຈະຫາວ່າເຮົາຂັດບ້ານ ຂັດອຳນາດການປົກຄອງໃດ.

ຮຸ່ງເຊົ້າຂອງວັນນັດຫມາຍ ບັນຍາກາດທີ່ຫນອງແຫ່ງນັ້ນ ຄັບຄັ່ງໄປ ດ້ວຍຜູ້ຄົນ ເຊິ່ງແຕ່ລະຄົນແມ່ນມີເຄື່ອງມືຈັບປາຢ່າງພ້ອມພຽງ. ໃນນັ້ນທ້າວກຳພ້າກໍ່ປະກອບສ່ວນນຳ. ການກອນຫນອງດຳເນີນໄປຢ່າງມ່ວນຊື່ນຈົນເວລາ ກາຍ

ເພນ (ກາຍທ່ຽງວັນ ) ຈຶ່ງພາກັນກິນເຂົ້າ. ພ້ອມດຽວກັນຢາດນ້ຳຕາຂອງລູກກຳພ້າ. ຕ້ອງຊຶມເບົ້າຕາອອກມາອີກຄັ້ງ ເມື່ອໄດ້ຍິນສຽງສາບແສ່ງຈາກຊາວບ້ານວ່າ: ບໍ່ໃຫ້ທ້າວກຳພ້າກິນເຂົ້າຮ່ວມນຳພວກເຮົາເດັດຂາດເພາະມັນ ບໍ່ໄດ້ຫາປານຳໝູ່, ທັງໆທີ່ທ້າວກຳພ້າກໍ່ຈັບປາເຂົ້າລວມໄດ້ຢ່າງຫລວງ ຫລາຍ ຍ້ອນຫິວດຽວແກມໝູ່ທ້າວກຳພ້າຈຶ່ງຕ້ອງກົ້ມນ້ຳຕາກົ້ມໜ້າຍ່າງລົງຫນອງອີກເປັນເທື່ອທີສອງເພື່ອຊອກເອົາປາຂຶ້ນມາຈີ່ກິນພໍໃຫ້ອຸ່ນທ້ອງ. ການຈັບປາຂອງທ້າວກຳພ້າດຳເນີນໄປຢ່າງຫງ່ອມເຫງົາທ່າມກາງສຽງໂຮແຊວຂອງ ຊາວບ້ານທີ່ນັ່ງອ້ອມພາເຂົ້າຢູ່ຕາມແຄມໜອງ, ດ້ວຍຄວາມອ່ອນເພຍທ້າວກຳ ພ້າຈຶ່ງຈັບປາໄດ້ພຽງ 2 ໂຕນ້ອຍທີ່ງອມຢູ່ເທິງໜ້ານ້ຳ, ເຊິ່ງມີປາດຸກແລະ ປາຫລົດທ້າວຈຶ່ງເອົາຂຶ້ນມາຈີ່ທັນທີພາຍຫລັງເອົາປາດຸກຖິ້ມເຂົ້າກອງໄຟແລ້ວບັງເອີນໄດ້ຍິນສຽງອ້ອນວອນທີ່ດັງອອກວ່າ: ຢ່າຂ້ານ້ອງເລີຍອ້າຍກຳພ້າ. ຂໍໃຫ້ອ້າຍຈົ່ງນຳເອົານ້ອງໄປລ້ຽງໄວ້ສາ. ດ້ວຍຄວາມເມດຕາສົງສານທ້າວກຳພ້າຈຶ່ງຕົກລົງຕາມຄວາມຮ້ອງຂໍແລະລ້ຽງປາໂຕນັ້ນຢ່າງທະນຸຖະໜອມ.

ຫລາຍວັນຜ່ານໄປ, ປາຫລົດນ້ອຍໂຕນັ້ນຈຶ່ງເວົ້າຕໍ່ທ້າວກຳພ້າວ່າ:

- ອ້າຍກຳພ້າເອີຍ! ກະລຸນາເອົານ້ອງໄປປ່ອຍຢູ່ວັງໂພສີພູນທອນ ນ້ອງຈະລົງມຸດເອົາເຄື່ອງຂອງເງິນຄຳຂຶ້ນມາໃຫ້ອ້າຍ.

ໄດ້ຍິນແນວນັ້ນ, ທ້າວກຳພ້າຈຶ່ງນຳເອົາປາໄປປ່ອຍທັນທີ.

ກ່ອນຈະມຸດລົງນ້ຳປາຫລົດໄດ້ເວົ້າຕໍ່ທ້າວກຳພ້າວ່າ:

- ໃນຂະນະທີ່ນ້ອງມຸດລົງນ້ຳນັ້ນເຖິງຢ່າງໃດກໍ່ໃຫ້ອ້າຍເວົ້າວ່າ:

- ປາຫລົດຂ້ອຍແພ້ເພີ່ນ, ປາຫລົດຂ້ອຍແພ້ເພີ່ນໆ... ດີ. ເວົ້າແລ້ວ ປາຫລົດກໍ່ມຸດນ້ຳໄປພ້ອມດຽວທ້າວກຳພ້າກໍ່ຮ້ອງຂຶ້ນວ່າ: ປາຫລົດຂ້ອຍແພ້ ເພີ່ນ ປາຫລົດຂ້ອຍແພ້ເພີ່ນ... ເວລາຜ່ານໄປບໍ່ພໍເທົ່າໃດເຂົ້າຂອງເງິນຄຳກໍ່ ຟູ

ຂຶ້ນມາຢ່າງຫລວງຫລາຍນັບແຕນັ້ນມາຄອບຄົວຂອງທ້າວກ່ຳພ້າກໍ່ອຸດົມສົມ ບູນ
ໄປດ້ວຍຊັບສິນ.

ເມື່ອເຫັນຄອບຄົວຂອງທ້າວກ່ຳພ້າຮັ່ງມີຄືແນວນັ້ນຫລາຍຄົນກໍ່ເກີດ ຄວາມອິດສາ. ຈຶ່ງພະຍາຍາມຖາມທ້າວກ່ຳພ້າວ່າ: ເປັນຫຍັງເຈົ້າຈຶ່ງມີເງິນ ຄຳຫລາຍເອົາແທ້?

ດ້ວຍຄວາມສັດຊື່ທ້າວກ່ຳພ້າຈຶ່ງຕອບວ່າ: ຍ້ອນປາຫລິດນ້ອຍຂ້ອຍນີ້ ແລ້ວມຸດລົງເອົາຢູ່ວັງໂພສີ. ໃນຂະນະທີ່ປາມຸດຂ້ອຍກໍ່ເວົ້າວ່າ: ປາຫລິດຂ້ອຍ ແພ້ເພີ່ນ ໆ... ເງິນຄຳກໍ່ຟູຂຶ້ນໂລດ, ພໍຮູ້ຈຸດພິເສດ ໄທບ້ານຜູ້ນັ້ນກໍ່ສວຍໂອ ກາດລັກເອົາປາຫລິດຂອງທ້າວກ່ຳພ້າໄປຢ່າງໜ້າດ້ານ. ແລ້ວນຳໄປປ່ອຍຢູ່ວັງໂພສີຫວັງຈະ ໄດ້ເຂົ້າຂອງເງິນຄຳດັ່ງທ້າວກ່ຳພ້າເຄີຍທຳຜ່ານມາ. ພໍປ່ອຍປາລົງນ້ຳແລ້ວຈຶ່ງເວົ້າຂຶ້ນວ່າ: ປາຫລິດຂ້ອຍແພ້ເພີ່ນ! ປາຫລິດຂ້ອຍແພ້ເພີ່ນ ຍ້ອນຄວາມໂລບຄວາມຫລົງຈຶ່ງລືມເວົ້າໄປວ່າ: ເພີ່ນແພ້ປາຫລິດຂ້ອຍ, ເພີ່ນແພ້ປາຫລິດຂ້ອຍ, ດ້ວຍເຫດດັ່ງກ່າວປາຫລິດໂຕນັ້ນຈຶ່ງຕາຍແລ້ວຟູຂຶ້ນເທິງໜ້າ ນ້ຳຢ່າງໜ້າສົງສານມັນກໍ່ເລີຍຈັບເອົາເມືອຖິ້ມ ໄວ້ຢູ່ເຮືອນຂອງທ້າວກ່ຳພ້າ ໃນເມື່ອເຫັນຜູ້ມີພະຄຸນຕໍ່ຕົນເອງຕາຍຄືແນວນັ້ນ ທ້າວກ່ຳພ້າຈຶ່ງຮ້ອງໄຫ້ຮ່ຳ ໄຮພ້ອມກັນນັ້ນກໍ່ທຳພິທີຈູດແລ້ວເອົາຝຸ່ນຂອງປາຫລິດໂຕນັ້ນໃສ່ໂຖແກ້ວໄວ້.

ທ່ຽງຄືນຂອງມື້ນັ້ນເອງໃນຂະນະທີ່ທ້າວກ່ຳພ້ານອນຫລັບປາຫລິດໂຕ ນັ້ນຈຶ່ງມານິມິດຕໍ່ຄວາມຝັນຂອງທ້າວວ່າ: ຖ້າມີສັດປະເພດອື່ນໆມາທຳ ລາຍເຄື່ອງປູກຂອງອ້າຍນັ້ນ. ໃຫ້ອ້າຍເອົາຝຸ່ນກະດູກຂອງນ້ອງ ທີ່ອ້າຍເກັບ ໄວ້ໄປໂຮຍໃສ່ຮອຍຕີນຂອງມັນມັນຈະຕາຍທັນທີໂລດ.

ພໍຮຸ່ງເຊົ້າ ທ້າວກ່ຳພ້າຈຶ່ງອອກໄປເບິ່ງນາ. ທີ່ເຂົ້າສຸກເຫລືອງເຕັມ ທົ່ງເຊິ່ງໝູປ່າທຳລາຍເປັນຫລາຍໆຈຸດ. ທ້າວຈຶ່ງຕົກລົງໂຮຍຝຸ່ນປາຫລິດໃສ່ຮອຍ

ຕົນນັ້ນທັນທີ, ຫລັງຈາກນັ້ນຈຶ່ງນຳຮອຍຕີນເຂົ້າໄປໃນດອນຫາງນາ. ຈຶ່ງ ເຫັນຫມູຕາຍ. ແລ້ວຈຶ່ງຈັດການປາດເອົາຊີ້ນເນື້ອເຮືອນຕໍ່ແຕ່ນັ້ນມາຄອບຄົວ ຂອງທ້າວກໍ່ພ້າກໍ່ອຸດົມສົມບູນໄປດ້ວຍຊີ້ນ, ປາອາຫານ.

ເມື່ອ ໄທບ້ານເຫັນດີແນວນັ້ນ. ຈຶ່ງຖາມທ້າວກໍ່ພ້າວ່າ:

- ເຫດໃດເຈົ້າຈຶ່ງຫາສັດປ່າ ໄດ້ຫລາຍແທ້?

- ກໍ່ຍ້ອນຝຸ່ນປາຫລົດຂ້ອຍນີ້ເດ ເອົາໂຮຍໃສ່ຮອຍຕີນຂອງມັນໆກໍ່ຕາຍທັນທີໂລດ.

ເມື່ອຮູ້ຈຸດພິເສດ ໄທບ້ານຜູ້ນັ້ນຈຶ່ງຫາວິທີລັກເອົາຝຸ່ນປາຫລົດຈົນໄດ້. ແລ້ວກໍ່ອອກໄປນາຍ່າງໄວວາ. ເພື່ອຈະໄດ້ກວາງ, ຟານມາກິນ. ເມື່ອໄປເຖິງສວນຫມາກແຕງກໍ່ພົບຮອຍຕີນຂອງຄົນຈຶ່ງຄິດວ່າອາດແມ່ນຄົນລັກຫມາກແຕງກູ ຄືນນີ້ ຈຶ່ງຈັດການໂຮຍຝຸ່ນໃສ່ທັນທີ. ແຕ່ແລ້ວຊ້ຳພັດແມ່ນຮອຍຕີນເມຍຂອງ ຕົນເອງ ເປັນເຫດໃຫ້ເມຍຕ້ອງຕາຍໂດຍທີ່ຕົນເອງບໍ່ທັນຮູ້. ການຊອກຮອຍ ຕີນດຳເນີນໄປທົ່ວສວນ. ພໍອອກຈາກສວນກໍ່ພົບຮອຍຕີນອີກ ເຊິ່ງເປັນຮອຍ ໃຫຍ່ຈຶ່ງຄິດວ່າອາດແມ່ນສອງຄົນລັກຫມາກແຕງກູຄືນນີ້. ກໍ່ໂຮຍຝຸ່ນໃສ່ແຕ່ແລ້ວ ພັດແມ່ນຮອຍຕີນຂອງຕົນເອງ ໃນທີ່ສຸດກໍ່ເລີຍຕາຍຍ້ອນນ້ຳມືຂອງຕົນ.

ຕໍ່ແຕ່ນັ້ນມາຄອບຄົວຂອງທ້າວກໍ່ພ້າ, ກໍ່ອຸດົມສົມບູນ. ປາສະຈາກໂລກ ໄພໄຂ້ເຈັບ, ເປັນທີ່ເພິ່ງພາອາໃສຂອງຊາວບ້ານແລະບໍ່ມີໃຜຈະອິດສາທ້າວ ກໍ່ພ້າອີກຕໍ່ໄປ.

# ຊາຍຫູຫ້ຽນ

- ອັນທອນ ບຸນລີວົງ

ເຫິງນານມາແລ້ວຍັງມີຊາຍຄົນໜຶ່ງຊື່ວ່າທ້າວຄຳ, ທີ່ອາໄສຢູ່ເຮືອນ ຫລັງໜຶ່ງແຄມເມືອງ. ພະຍາປົກຄອງເມືອງນີ້ເປັນຄົນມີຈິດໃຈກ້ວາງຂວາງ ມີຄວາມເມດຕາປານີຕໍ່ຄົນທັງຫລາຍ, ພະອົງໄດ້ມີລູກສາວເຈັດຄົນທີ່ພວມ ເປັນສາວເໝືອນດອກໄມ້ກຳລັງບານ, ແຕ່ຍັງບໍ່ທັນມີໃຜແຕ່ງງານເທື່ອ. ຫລາຍປີທີ່ພະຍາໄດ້ປົກຄອງເມືອງມາເຮັດໃຫ້ຊາວເມືອງທັງຫລາຍບໍ່ອຶດເຂົ້າ ຢາກເກືອ, ໃຜກໍ່ຢູ່ເຢັນເປັນສຸກຕະຫລອດມາ. ຢູ່ມາຄືນໜຶ່ງພະອົງໄດ້ຝັນວ່າຢູ່ ໃນຖ້ຳຜາຫີນແຄມແມ່ນ້ຳໃກ້ເມືອງໄດ້ມີເພັດໜ່ວຍໜຶ່ງງາມທີ່ສຸດ ສົ່ງແສງ ຮຸ່ງເປັນປະກາຍ. ພະຍາຝັນວ່າເພັດໜ່ວຍນັ້ນໄດ້ມາເປັນສົມບັດຂອງພະອົງໂດຍທີ່ບໍ່ຮູ້ສາຍເຫດວ່າເອົາກ້ອນເພັດນັ້ນມາໄດ້ແນວໃດ, ເບິ່ງແສງສີຂອງ ໜ່ວຍເພັດໄດ້ຮຸ່ງສົ່ງແສງອອກຈາກປ່ອງຢ້ຽມຂອງພະລາຊະວັງໄປທົ່ວເມືອງຈົນວ່າຍາມຄ່ຳມືດກໍ່ສາມາດຫລຽວເບິ່ງທົ່ວທັງເມືອງອັນກວ້າງໃຫຍ່ໄດ້ປານ ກາງເວັນ.

ເມື່ອຕື່ນເຊົ້າມາພະຍາຈຶ່ງໄດ້ຕີກອງໃຫ້ເສນາອາມາດເຂົ້າເຝົ້າພະອົງໄດ້ເລົ່າລາງຝັນໃນຄືນຜ່ານມາສູ່ອາມາດທັງຫລາຍຟັງ ແລະປຶກສາຫາລືກັນ ຫາທີ່ຈະຫາເອົາໜ່ວຍເພັດນັ້ນໃຫ້ໄດ້, ແຕ່ກໍ່ບໍ່ມີອາມາດຄົນໃດທີ່ຈະມີແຜນ ສາມາດເອົາໜ່ວຍເພັດນັ້ນມາໄດ້. ນັບແຕ່ນັ້ນມາພະຍາໄດ້ມີຄວາມ ຫ່ວງ

ເຫງົາເພາະບໍ່ມີໃຜສາມາດທີ່ຈະໄປເອົາຫນ່ອຍເພັດນັ້ນໄດ້, ຢູ່ມາວັນ ຫນຶ່ງພະຍາໄດ້ປະກາດວ່າ: ຖ້າໃຜສາມາດໄປເອົາຫນ່ອຍເພັດນັ້ນມາໃຫ້ພະອົງໄດ້ພະອົງຈະຍົກລູກສາວທັງເຈັດໃຫ້ເປັນເມຍ ຫລືຈະເລືອກເອົາໃຜກໍ່ໄດ້ ໃນລູກສາວທັງເຈັດຂອງພະອົງ.

ຄໍາປະກາດດັ່ງກ່າວໄດ້ແຜ່ລາມອອກໄປທົ່ວເມືອງ, ແຕ່ກໍ່ບໍ່ມີໃຜທີ່ອາດ ສາມາດຈະໄປນໍາເອົາເພັດມາໄດ້, ເພາະຖໍ້າແຫ່ງນັ້ນແມ່ນຢູ່ແຄມວັງນໍ້າທີ່ ເລົ່າລືກັນວ່າມີພິເງືອກ, ຖ້າໃຜລົງໄປໃນຖໍ້າດັ່ງກ່າວແມ່ນຈະຖືກພິເງືອກເອົາ. ຄໍາປະກາດຂອງພະຍາໄດ້ຊ່າລືໄປຮອດກໍ່ພ້າທີ່ອາໃສຢູ່ນອກເມືອງ. ຍ້ອນ ເຫັນໄດ້ນໍ້າໃຈອັນເຫລື້ອມໃສຂອງພະອົງທີ່ໄດ້ເຮັດໃຫ້ຊາວເມືອງທັງຫລາຍບໍ່ ວ່າຜູ້ທຸກຈົນດັ່ງທ້າວຄໍາກໍ່ບໍ່ຖືກກົດຂີ່ຂູດຮີດຫລືໃຫ້ໄປເປັນຂ້ອຍແກ່ພະຍາ ເຫມືອນດັ່ງພະຍາເມືອງຫລາຍອົງທີ່ປົກຄອງເມືອງນີ້ມາ, ສະນັ້ນທ້າວຄໍາຈຶ່ງຂັນອາສາໄປຫາຫນ່ອຍເພັດດັ່ງກ່າວມາໃຫ້ພະຍາ, ທ້າວຄໍາຄິດວ່າເຖິງຈະຕາຍກໍ່ຂໍ ສະຫລະຊີວິດຕົນເພື່ອບຸນຄຸນຂອງພະອົງທີ່ມີຕໍ່ຊາວເມືອງທັງຫລາຍ.

ຮຸ່ງເຊົ້າມື້ຕໍ່ມາທ້າວຄໍາໄດ້ໄປຫາພະຍາເພື່ອເລົ່າຈຸດປະສົງຂອງຕົນສູ່ ພະອົງຟັງ, ແລ້ວພະຍາກໍ່ເຫັນດີເຫັນພ້ອມນໍາ, ມື້ຕໍ່ມາທ້າວຄໍາໄດ້ອອກເດີນ ທາງໄປຫາຫນ່ອຍເພັດນັ້ນລູກສາວທັງເຈັດຂອງພະຍາແລະ ຊາວເມືອງທັງຫລາຍກໍໄດ້ອອກໄປສົ່ງທ້າວຄໍາຮອດແຄມເມືອງທຸກຄົນຕ່າງກໍອວຍພອນໃຫ້ລາວ ກັບມາພ້ອມດ້ວຍຫນ່ອຍເພັດ. ເມື່ອໄປຮອດທ້າວຄໍາໄດ້ມຸດລົງວັງນໍ້າໄປຕາມ ຮູຖໍ້າທີ່ເລິກເຂົ້າໄປໃຈກາງຜາຫີນທ້າວຄໍາເຂົ້າໄປຮູຖໍ້າໄດ້ຫົກວັນກໍເຫັນ ກ້ອນເພັດທີ່ສ່ອງແສງຮຸ່ງອອກຕາມຮູຖໍ້າ. ແຕ່ມີຈະຮອດກ້ອນເພັດນັ້ນ ຮູທີ່ຈະເຂົ້າໄປຫາເພັດເປັນຮູນ້ອຍ ພໍແຕ່ຈະປ່ອນຫົວເຂົ້າໄປໄດ້ເທົ່ານັ້ນ. ທ້າວຄໍາຄິດວ່າເຖິງແນວໃດກໍ່ມາຮອດສໍ່ານີ້ແລ້ວຈະເປັນແນວໃດກໍຂໍໃຫ້ເປັນໄປຕາມບຸນວາ ສະ

ຫນາຂອງຕົນສະນັ້ນລາວຈຶ່ງປ່ອນຫົວເຂົ້າຮ່ອມຮູຖ້ຳດັ່ງກ່າວ, ພໍຫວິດຫົວຊິຫມົ້ນໄປຫນ້າກໍ່ບໍ່ສາມາດໄປໄດ້ອີກ ແລະຊິກັບຄືນກໍ່ຄຸງໃບຫູທັງສອງ ທ້າວຄຳ ໄດ້ຄາຢູ່ຮູຖ້ຳດ້ວຍຄວາມທໍລະມານ. ແຕ່ເປັນຈັ່ງບຸນຮູຖ້ຳດັ່ງກ່າວແມ່ນທາງຮູ ກຸ້ງທີ່ອາໃສເຂົ້າໆອອກໆເປັນປະຈຳ; ສະນັ້ນເມື່ອມີຫົວຂອງທ້າວຄຳຄາຢູ່ຮູ ກຸ້ງທັງຫລາຍບໍ່ສາມາດເຂົ້າ-ອອກໄດ້ມັນຈຶ່ງໄດ້ກັດໃບຫູຂອງລາວຈົນຫ້ຽນ ແລະກັດຮູຖ້ຳໃຫ່ຍອອກຈັກໃຊ້, ຈົນໃນທີ່ສຸດທ້າວຄຳກໍສາມາດເຂົ້າໄປຫາ ຫນ່ອຍເພັດນັ້ນໄດ້. ແລ້ວກໍກັບເມືອຫາພະຍາ.

ກ່າວເຖິງລູກສາວທັງເຈັດຂອງພະຍານັບແຕ່ທ້າວຄຳໄດ້ອອກຈາກ ເມືອງໄປເອົາຫນ່ອຍເພັດນັ້ນໄດ້ສາມສີ່ວັນບໍ່ເຫັນກັບກໍ່ມີຄວາມອາໄລອາວອນເພາະຢ້ານທ້າວຄຳຖືກເງືອກເອົາ, ພິເສດແມ່ນລູກສາວຫລ້າຂອງພະຍາ ຍາມ ໃດກໍ່ຮ້ອງໄຫ້ນ້ຳຕາອາບແກ້ມເພາະຄິດສົງສານທ້າວຄຳທີ່ເອົາຊີວິດຂອງຕົນ ໄປແລກເອົາຫນ່ອຍເພັດດັ່ງກ່າວ, ພໍຮອດມື້ທີ່ເຈັດໃນຂະນະທີ່ຄົນທັງຫລາຍຄິດວ່າທ້າວຄຳຈະບໍ່ກັບຄືນມາອີກແລ້ວ, ຕໍ່ມາຄົນທີ່ອາບຢູ່ທ່ານ້ຳຈຶ່ງພົບທ້າວຄຳ ອອກມາຈາກນັ້ນຄົນທັງຫລາຍຈຶ່ງເມືອຂ່າວໃຫ້ພະຍາຮູ້ວ່າທ້າວຄຳກັບຄືນມາ ແລ້ວຕໍ່ມາກໍ່ເຫັນຊາວເມືອງທັງຫລາຍແຫ່ແຫນທ້າວຄຳເຂົ້າໄປໃນເມືອງ. ຄົນ ທັງຫລາຍໄດ້ເຫັນຫູທັງສອງຂອງທ້າວຄຳກຸດຫ້ຽນ ໃຜກໍ່ຄິດອີ່ດູສົງສານ, ແຕ່ ພໍທ້າວຄຳກ້າວເຂົ້າໄປພະລາຊາວັງ ຂອງພະຍາ ຮ່າງກາຍຂອງທ້າວຄຳ ໄດ້ປ່ຽນເປັນຄົນຂາວສູງສະຫງ່າໃບຫນ້າຄົມຄາຍ, ຫູທັງສອງທີ່ກຸດຫ້ຽນໄປ ກໍ່ປົ່ງຄືນຄືເກົ່າຄືຫລັງ. ພວກຜູ້ສາວເຫັນທ້າວຄຳກໍ່ຄິດມັກຢູ່ໃນໃຈ. ພໍດີພະຍາ ພ້ອມລູກສາວທັງເຈັດໄດ້ອອກມາຕ້ອນຮັບທ້າວຄຳ, ລູກສາວທັງຫົກຂອງພະຍາ ທີ່ເປັນເອື້ອຍໄດ້ເອີ້ຍອງໄປດ້ວຍສິ້ນຫມີ່, ຜ້າໄຫມ, ພະຍາເອງກໍມີຄວາມດີ ໃຈຢ່າງລົ້ນເຫລືອທີ່ເຫັນທ້າວຄຳກັບມາພ້ອມດ້ວຍຫນ່ອຍເພັດ ເຮັດໃຫ້ຄວາມຝັນ

ຂອງພະອົງກັບກາຍມາເປັນຄວາມຈິງ. ມີແຕ່ລູກສາວຫລ້າຂອງພະອົງທີ່ໄຫ້ນ້ຳຕາອາບແກ້ມຍ້ອນຄວາມດີໃຈ ແລະນາງຫລ້າເອງກໍ່ບໍ່ໄດ້ເອີ້ຍອ້ອງຄືກັບເອື້ອຍທັງຫົກຂອງນາງ.

ຕອນແລງມື້ນັ້ນພະຍາພ້ອມກັບຊາວເມືອງໄດ້ຂ້າງົວແລະຄວາຍແນວລະຫ້າໂຕເພື່ອເປັນການຕ້ອນຮັບແລະແຕ່ງງານໃຫ້ທ້າວຄຳ ກັບ ລູກສາວທັງ ເຈັດຂອງພະອົງຕາມຄຳສັນຍາທີ່ພະອົງໄດ້ປະກາດໄປ. ແຕ່ທ້າວຄຳໄດ້ຂໍເອົານາງຫລ້າເທົ່ານັ້ນເປັນເມຍ, ພະຍາກໍ່ບໍ່ຂັດຂ້ອງແຕ່ປະການໃດ. ງານຕ້ອນຮັບແລະແຕ່ງງານໃຫ້ທ້າວຄຳກັບລູກສາວຫລ້າຂອງພະຍາໄດ້ດຳເນີນໄປເປັນ ເວລາຫ້າມື້ຫ້າຄືນຈຶ່ງຈົບລົງ. ນັບແຕ່ນັ້ນມາທ້າວຄຳຜູ້ທຸກຍາກໄດ້ເປັນລູກເຂີຍ ຂອງພະຍາ, ຫລາຍປີຜ່ານໄປເມື່ອພະຍາຜູ້ປົກຄອງເມືອງໄດ້ສິ້ນພະຊົນ, ທ້າວ ຄຳຜູ້ເປັນລູກເຂີຍກໍ່ໄດ້ຂຶ້ນຄອງລາຊະບັນລັງແທນແລະພາຊາວເມືອງທຳມາ ຫາກິນສ້າງສາບ້ານເມືອງຕໍ່ມາ.

# ກຳພ້າໄຂ່ຫ່ານ

* ວັນທອນ ບຸນລິວົງ

ແຕ່ກີ້ແຕ່ກ່ອນເປິງສັດສາຍັງຮູ້ປາກ ຄົນຄາກຍັງເປັນພະຍາ ພະອິນພະພົມຢູ່ເມືອງຟ້າ ເມືອງແຖນຍັງມີຕາທິບຕາແກ້ວສ່ອງລົງມາໂລກລຸ່ມ. ຍັງມີທ້າວກຳພ້າເປັນຂ້ອຍໃຫ້ເສດຖີ, ແຕ່ລະມື້ໄປກ່ຽວຫຍ້າມ້າຕາເວັນລັບຂອບຟ້າຈຶ່ງ ຫັນຫນ້າເຂົ້າເມືອງ. ຍ້ອນຄວາມທຸກຍາກປາກຫມອງ, ພໍ່ແມ່ຕາຍປະແຕ່ຕອນ ຍັງນ້ອຍ, ອາໄສພີ່ນ້ອງກໍ່ບໍ່ມີ. ສະນັ້ນເສດຖີຈຶ່ງເອົາໄປເປັນຂ້ອຍກ່ຽວຫຍ້າ ມ້າໃຫ້.

ເມືອງນີ້ຕັ້ງຢູ່ແຄມຫນອງໃຫຍ່. ເສດຖີຄົນນີ້ແມ່ນນັກລ້ຽງມ້າໄວ້ຫລາຍເປັນພິເສດ. ແຕ່ລະມື້ທ້າວກຳພ້າ ໄດ້ລຸກແຕ່ເຊົ້າເພື່ອອອກໄປກ່ຽວຫຍ້າມ້າຢູ່ ທົ່ງຫຍ້າແຄມຫນອງໃຫຍ່, ກ່ຽວຫຍ້າແຕ່ເຊົ້າຈົນຮອດຍາມຕາເວັນທ່ຽງຟ້າຈຶ່ງ ມີກວຽນໄປຂົນຫຍ້າມ້າ ເຂົາຈຶ່ງຖືເຂົ້າງາຍໄປໃຫ້ກຳພ້າກິນ, ມື້ໃດກຳພ້າກ່ຽວຫຍ້າບໍ່ເຕັມກວຽນທຸກເຫລັ້ມທີ່ໄປຕ່າງເອົາຫຍ້າມ້ານັ້ນຈະຖືກເສດຖີປ້ອຍ ດ່າຫລືໃຫ້ອົດເຂົ້າແລງເພື່ອເປັນການລົງໂທດ. ເສດຖີຄົນນີ້ແມ່ນຮັກມ້າກວ່າ ຄົນທຳມະດາສະນັ້ນຄົນທັງຫລາຍຈຶ່ງເອີ້ນວ່າ: "ເສດຖີຫນ້າມ້າ" ໃນເວລາ ລັບຫລັງ.

ມີວັນຫນຶ່ງກຳພ້າອອກໄປກ່ຽວຫຍ້າມ້າແຕ່ເຊົ້າເມື່ອໄປຮອດທົ່ງຫຍ້າກຳພ້າກໍ່ໄດ້ຕັ້ງຫນ້າໃສ່ວຽກຂອງຕົນ. ຕາເວັນທ່ຽງກໍ່ບໍ່ເຫັນຄົນຮັບໃຊ້ຂອງເສດຖີໄປ

ສົ່ງເຂົ້າ ແລະ ເອົາກວຽນໄປຕ່າງເອົາຫຍ້າມ້າ. ກຳພ້າມີຄວາມອິດ ເມື່ອຍ ທັ້ງຫິວເຂົ້າ, ແຕ່ກໍ່ຈຳເປັນກ່ຽວຫຍ້າຕໍ່ໄປເພາະຖາບໍ່ເຮັດວຽກຄົນຮັບ ໃຊ້ ເສດຖີມາເຫັນເຂົາຊິໄປຟ້ອງຕໍ່ເສດຖີ. ຍອມຄວາມຊື່ສັດບໍລິສຸດຂອງກຳ ພ້າ ເຖິງຈະທຸກຍາກກໍ່ບໍ່ເຄີຍລັກເຄີຍເລັມຂອງໃຜຈັກເທື່ອ ແລະຍອມຄວາມເມດ ຕາປານີ, ສະນັ້ນພະອິນພະພົມຈຶ່ງໄດ້ເນລະມິດເອົາໄຂ່ທ່ານລົງມາໄວ້ຕໍ່ ຫນ້າ ບ່ອນທີ່ທ້າວກຳພ້າກ່ຽວຫຍ້າຢູ່. ເມື່ອກຳພ້າກ່ຽວຫຍ້າຕໍ່ໄປໄດ້ພໍ້ໄຂ່ທ່ານຫນ່ອຍ ຫນຶ່ງຢູ່ໃນຮັງກາງທົ່ງຫຍ້າ. ກຳພ້າມີຄວາມປະຫລາດໃຈທີ່ເຫັນໄຂ່ແຕ່ບໍ່ ເຫັນ ທ່ານຈັກໂຕ ແລະນັບແຕ່ມື້ທີ່ຕົນມາກ່ຽວຢູ່ເຂດນີ້ກໍ່ບໍ່ເຄີຍເຫັນທ່ານຈັກໂຕເລີຍ ເຖິງແນວໃດກຳພ້າກໍ່ບໍ່ໄດ້ໄປແຕະຕ້ອງໄຂ່ຫນ່ອຍນັ້ນ, ເພາະຢ້ານມີຄົນ ອື່ນ ເປັນເຈົ້າຂອງ. ເຊົ້າມື້ຕໍ່ມາເວລາກຳພ້າອອກໄປກ່ຽວຫຍ້າ ລາວກໍ່ໄດ້ ໄປ ເບິ່ງໄຂ່ຫນ່ອຍນັ້ນ, ແຕ່ຢູ່ໃນຮັງແທນທີ່ຈະແມ່ນໄຂ່ພັດແມ່ນທ່ານນ້ອຍໂຕ ຫນຶ່ງ ທີ່ສົ່ງສຽງຮ້ອງຢ່າງຫນ້າສົງສານຢູ່ໃນຮັງ. ຕອນແລງວັນນັ້ນເວລາກັບ ເມືອ ເຮືອນກຳພ້າໄດ້ເອົາທ່ານນ້ອຍໂຕນັ້ນເມືອນຳ ເພາະປະໄວ້ກໍ່ບໍ່ເຫັນແມ່ ມັນ ແລະບໍ່ເຫັນເຈົ້າຂອງທ່ານມາເບິ່ງຢ້ານທ່ານນ້ອຍຈະຕາຍ. ເມື່ອມາຮອດ ຕູບ ນ້ອຍກຳພ້າໄດ້ເອົາເຂົ້າເກືອທ່ານນ້ອຍໂຕນັ້ນແລະປະໃຫ້ມັນຢູ່ພາຍໃນເຮືອນ ນັ້ນນຳ. ເມື່ອຕື່ນເຊົ້າມາກຳພ້າຫລຽວເບິ່ງກາງເຮືອນແທນທີ່ຊິເຫັນຂີ້ທ່ານພັດ ເຫັນເມັດຄຳຢັ້ງຢາຍຢູ່ທົ່ວກາງເຮືອນ. ຂີ້ຂອງທ່ານນ້ອຍທີ່ຫລົ່ນກໍ່ກັບ ກາຍ ເປັນເງິນສ້ຽນເງິນຂັນ. ນັບແຕ່ນັ້ນເປັນຕົ້ນມາກຳພ້າໄດ້ເອົາເງິນຄຳ ຈຳ ນວນນັ້ນໄປໃຊ້ຈ່າຍຊື້ເຂົ້າຊື້ນ້ຳມາກິນ, ຢູ່ຫລາຍມື້ທ່ານນ້ອຍກໍ່ໄດ້ໃຫ້ເມັດ ຄຳ ແລະເງິນຢ່າງຫລວງຫລາຍຈົນເຫລືອຈ່າຍເຫລືອໃຊ້, ກຳພ້າຈຶ່ງເອົາໃຫ້ຊາວ ບ້ານໃກ້ຄຽງໃຊ້ຈ່າຍນຳ.

ກ່າວເຖິງເສດຖີເມື່ອບໍ່ເຫັນກຳພ້າໄປກ່ຽວຫຍ້າມ້າໃຫ້ມັນຫລາຍມື້, ຈຶ່ງ

ແຕ່ງໃຫ້ຄົນໃຊ້ໄປເບິ່ງກຳພ້າ. ເມື່ອກັບມາເຖິງເຮືອນຄົນໃຊ້ໄດ້ເວົ້າຕໍ່ ເສດຖີຟັງວ່າ ກຳພ້າໄດ້ມີເງິນມີຄຳໃຊ້ຈ່າຍຈຶ່ງບໍ່ມາກ່ຽວຫຍ້າມາ, ສະນັ້ນເສດ ຖີຈຶ່ງສັ່ງໃຫ້ຄົນໃຊ້ໄປຈັບເອົາກຳພ້າແລະທ່ານນັ້ນມາ. ເມື່ອມາຮອດເສດຖີ ໄດ້ຖາມກຳພ້າເຖິງເລື່ອງລາວຕ່າງໆ, ກຳພ້າກໍ່ໄດ້ເລົ່າເລື່ອງທ່ານນ້ອຍນັ້ນ ໃຫ້ເສດຖີຟັງ, ຍ້ອນຄວາມໂລບມາກໂລພາຮັ່ງແລ້ວຢາກມີຕື່ມເສດຖີຈຶ່ງໄດ້ຂູ່ເອົາທ່ານນຳກຳພ້າ, ຖ້າກຳພ້າບໍ່ມອບທ່ານໃຫ້ ເສດຖີຈະຂ້າກຳພ້າເສຍ, ສະ ນັ້ນກຳພ້າຈຶ່ງຕົກລົງເອົາທ່ານໃຫ້ເສດຖີ, ສ່ວນເສດຖີກໍ່ໄດ້ປະຕິບັດຕາມຄຳ ເວົ້າຂອງກຳພ້າ. ຮຸ່ງເຊົ້າມື້ໃໝ່ຕໍ່ມາເສດຖີກໍ່ຟ້າວໄປເບິ່ງບ່ອນທີ່ເອົາທ່ານນັ້ນໄວ້ ແຕ່ແທນທີ່ຂີ້ທ່ານຈະເປັນເມັດຄຳພັດເປັນຂີ້ທ່ານແທ້ໆ ຢ່ວຍຢາຍໄປທົ່ວທັງເໝັນກຸ້ມໄປທົ່ວທິບ, ຂົນຂອງທ່ານທີ່ຫລົ່ນກໍ່ໄດ້ເປັນສ້ຽນເປັນໜາມຢາຍຢູ່ ກາວເຮືອນຕື່ມອີກ. ເຖິງຈະໃຫ້ຄົນໃຊ້ເອົານ້ຳລ້າງປານໃດກິ່ນເໝັນກໍ່ຍັງບໍ່ ເຫີຍເປັນຈັກເທື່ອ, ຈົນຄົນທັງຫລາຍບໍ່ສາມາດເຂົ້າໄປໃນເຮືອນເສດຖີໄດ້, ສະນັ້ນເສດຖີຈຶ່ງເປັນເດືອດເປັນແຄ້ນແລ້ວຂ້າທ່ານໂຕນັ້ນເສຍ, ຈາກນັ້ນກໍ່ໃຫ້ຄົນໃຊ້ນຳເອົາທ່ານທີ່ຂ້າແລ້ວໄປໃຫ້ກຳພ້າ, ສ່ວນກຳພ້າເມື່ອຫລຽວເຫັນທ່ານ ນ້ອຍທີ່ຖືກຂ້າຕາຍກໍ່ຮ້ອງໄຫ້ຈົນນ້ຳຕາໄຫລຢ່າງໜ້າເສຍດາຍ, ເພື່ອເປັນ ການຕອບບຸນຄຸນຂອງທ່ານນ້ອຍໂຕນັ້ນກຳພ້າຈຶ່ງໄດ້ນຳເອົາທ່ານໄປຝັງໄວ້ແຄມຮົ້ວໃກ້ເຮືອນ. ຜ່ານໄປຫລາຍມື້ຫລາຍເດືອນບ່ອນທີ່ກຳພ້າຝັງທ່ານນັ້ນໄດ້ເກີດຕົ້ນໄມ້ຂົ້ນຕົ້ນໜຶ່ງ. ແຕ່ລະເຊົ້າກຳພ້າໄດ້ເອົານ້ຳໄປຫົດ, ຕົ້ນໄມ້ນັ້ນກໍ່ເຕີບ ໃຫຍ່ຂຶ້ນທຸກມື້. ຮອດຍາມລະດູບານໃໝ່ຕົ້ນໄມ້ດັ່ງກ່າວໄດ້ອອກດອກທີ່ສວຍງາມ ທີ່ສຸດແລະສົ່ງກິ່ນອັນຫອມຫວນໄປທົ່ວບ້ານເຮືອນ. ກ່າວເຖິງເສດຖີຜູ້ໂລບ ມາກໂລພານັບແຕ່ທ່ານນ້ອຍໄດ້ຂີ້ໃສ່ເຮືອນຂອງມັນກໍ່ບໍ່ມີໃຜເຂົ້າໄປໃນເຮືອນຂອງມັນອີກ, ຍ້ອນກິ່ນເໝັນຂອງຂີ້ທ່ານທີ່ບໍ່ເຫີຍເປັນຈັກເທື່ອແລະຍ້ອນຄວາມຂີ້ ຖີ່

ຢາກໄດ້ຢາກມີແຕ່ຕົນຜູ້ດຽວ ຊາວບ້ານຊາວເມືອງຈຶ່ງຄຽດຊັງຂາດຄວາມນັບຖືຈາກຜູ້ຄົນທັງຫລາຍ.

ສ່ວນກ່ຳພ້າ ນັບແຕ່ທ່ານນ້ອຍຖືກເສດຖີຂ້າຕາຍເສຍແລ້ວ, ລາວກໍ່ໄດ້ ນຳເອົາເງິນຄຳທີ່ທ່ານນ້ອຍໂຕນັ້ນໂຜດທານໃຫ້ມາສ້າງແປງເຮືອນຊານ. ຈາກນັ້ນມາກໍ່ໄດ້ແຕ່ງງານກັບຍິງສາວຜູ້ໜຶ່ງທີ່ມີຄວາມຮັກກັນຢ່າງຈິງໃຈ. ຍ້ອນ ມີຈິດໃຈກ້ວາງຂວາງແລະມີຄວາມຊ່ວຍເຫລືອຮັກແພງ, ຊາວບ້ານຊາວ ເມືອງຈຶ່ງໄດ້ຍົກໃຫ້ທ້າວກ່ຳພ້າຂຶ້ນເປັນຜູ້ປົກຄອງເມືອງນັ້ນແທນເສດຖີຜູ້ໂລບ ມາກໂລພາ, ນັບແຕ່ນັ້ນມາຊາວເມືອງທັງຫລາຍກໍ່ດຳລົງຊີວິດຢູ່ດ້ວຍຄວາມຢູ່ ເຢັນເປັນສຸກຕະຫລອດມາ.

# ນາງຫລ້າ

* ຄຳໃສ

ສະໄໝໜຶ່ງ ທີ່ຜ່ານຊານບານຫາຫລັກຖານ ໃຫ້ຈຳໄດ້ຍາກແສນລຳ ບາກ ນັບເປັນເດືອນ. ນະທີ່ພູເຂົາເນີນ ທີ່ຫ່າງໄກຈາກບ້ານຄົນພໍສົມຄວນ. ໄດ້ ມີ ຕູບໃບຕອງຫລັງໜຶ່ງເປັນທີ່ອາໃສຂອງຄອບຄົວອານາຖາຫາລ້ຽງຊີບໄດ້ແສນ ຍາກ ມີພໍ່ຊະລາພ້ອມດ້ວຍລູກສາວສາມຄົນ ສ່ວນພໍ່ຊະລາຄົນນັ້ນບໍ່ສາມາດໄປ ໃສມາໃສໄດ້ມີແຕ່ກິນກັບບ່ອນນອນກັບທີ່ ແມ່ນແຕ່ຖ່າຍກໍໄປບໍ່ໄດ້ ສ່ວນລູກກົກ ທັງສອງນັ້ນພັດບອກນອນສອນຍາກມີແຕ່ລູກສາວຫລ້າເຊື່ອຟັງຄຳສັ່ງສອນແລະ ນາງເອງເປັນຜູ້ບົວລະບັດພໍ່ຫາຢູ່ຫາກິນ. ຖ່າຍເຕົ້າຖ່າຍວ້ຽງ. ໂຊມລູກ ໂຊມ ນັ້ງ ສ່ວນທັງສອງ ມີແຕ່ເລາະກິນຕາມປ່າຕາມດົງເອົາສັດສາວາສິ່ງເປັນໝູ່ ເພື່ອນ ຍ້ອນແນວນັ້ນ ພໍ່ຊະລາຈຶ່ງບໍ່ເຄີຍດີໃຈປານໃດ ເຊົ້າຄ່ຳວັນຄືນມີ ແຕ່ ຈົ່ມຢູ່ພໍປານນັ້ນ ຢູ່ມາວັນໜຶ່ງພໍ່ກໍປ່ວຍໜັກ ລູກຫລ້າກໍໄປຕັກນ້ຳຢູ່ຮ່ອມຜາ ທີ່ ແສນໄກ. ພໍດີເອື້ອຍທັງສອງກັບໄປເຮືອນ ພໍ່ຈຶ່ງສັ່ງເປັນສຽງສຸດທ້າຍໃຫ້ ແກ່ ເອື້ອຍທັງສອງວ່າ: "ໄຫເງິນໄຫຄຳພ້ອມທັງພື້ນດາງນີ້ ຂໍລູກທັງສາມ ຈົ່ງ ແບ່ງກັນເນີ ສຸດສຽງກໍຈາກໄປດ້ວຍຄວາມຫ່ວງໃຍຕໍ່ລູກຜູ້ນ້ອຍ ສ່ວນ ເອື້ອຍ ທັງສອງເມື່ອໄດ້ໄຫເງິນຄຳແລ້ວ ກໍເອົາໄປຂາຍທ່ຽວຫລິ້ນທ່ຽວກິນຢູ່ ໃນ ເມືອງໂດຍບໍ່ຄຳນຶງເຖິງສິບຂອງພໍ່ຢູ່ໃນເຮືອນ. ເມື່ອລູກສາວຫລ້າກັບມາເຫັນ ພໍ່ນອນຕາຍຢູ່ພ້ອມທັງພື້ນດາງໜຶ່ງຢູ່ຂ້າງໆນາງກໍຮ້ອງໄຫ້ເສົ້າໂສກໂສ ກາ

ຢ່າງຫນ້າສົມເພດເວດທະນາ. ນາງໄດ້ເກັບສົບພໍ່ໄວ້ສອງມື້ ແລ້ວກໍເຜົາເສຍໃນທີ່ສວນ. ນາງຄະນຶງໃນໃຈວ່າ: ຟືມດາງນີ້ຄົງແມ່ນເພິ່ນເອົາໄວ້ໃຫ້ລູກ ທັງສາມນາງຈຶ່ງພະຍາຍາມເຮັດຫູກເຮັດຝ້າຍລ້ຽງຄອບຄົວທັງສາມໄດ້, ເຖິງແມ່ນວ່າເອື້ອຍທັງສອງໄດ້ລັກເອົາເງິນຄຳໄປຂາຍເມື່ອຂາຍແລະກິນ ຫມົດແລ້ວ ກໍກັບມາເພິ່ງນ້ອງສາວຄົນເກົ່າ ໂດຍບໍ່ຄິດເຮັດສ້າງສາຫຍັງທັງສິ້ນ.

ຢູ່ຕໍ່ມາ ມີຊາຍສະຫລາດຄົນຫນຶ່ງກຳລັງຊອກຫາເມຍ ຜ່ານມາຫລາຍບ້ານຫລາຍເມືອງ ແຕ່ບໍ່ໄດ້ຕາມຕຳລາຂອງຕົນ ຈຶ່ງເດີນທາງມາຮອດບ້ານ ຂອງນາງທັງສາມ ໃນຕອນເຊົ້າຍັງມີຫມອກຄວັນປົກຫຸ້ມມືດຢູ່ ຊາຍສະຫລາດ ໄດ້ຫຸ້ມຜ້າລາຍມາຢືນຢູ່ໃກ້ໆກັບບ້ານ ເຮັດໃຫ້ຫມາເຫົ່ານອງຍົວໆຜູ້ເປັນ ເອື້ອຍທັງສອງແນມເຫັນວ່າເປັນຜູ້ບ່າວ ຈຶ່ງຟ້າວຮ້ອງໃສ່ດ້ວຍຄວາມອ່ອນ ຫວານຮ້ອງຢາກໃຫ້ຂຶ້ນມາລົມ ແຕ່ຊາຍສະຫລາດກໍຍັງຢືນຢູ່ເສີຍໆຫມາກໍເຫົ່າ ໄປເລື້ອຍໆສາວຜູ້ເປັນນ້ອງຫລ້າຈຶ່ງຮ້ອງຮ້າຍວ່າ:

ຜູ້ໃດເດ ສັງມາຜິດຄອງເຄົ້າຫຸ້ມຜ້າລາຍໃຫ້ຫມາເຫົ່າເດນໍ ຍາມ ເມື່ອເຊົ້າແທ້ໆ ໄກ່ບ້ານບໍ່ຕື່ນນອນ. ເມື່ອໄດ້ຍິນແນວນັ້ນ ຊາຍສະຫລາດກໍ ຂຶ້ນເຮືອນມາຖາມຂ່າວຖາມຄາວ ຮ້ອງຂໍນາງໄປເປັນເມຍ, ແຕ່ເອື້ອຍທັງ ສອງຄັດຄ້ານວ່າ: ຖ້າຫາກນ້ອງເອົາຜົວກ່ອນເອື້ອຍກໍຜິດຮີດຜິດຄອງແທ້ໆ ເມື່ອ ພິຈາລະນາແລ້ວນ້ອງຈຶ່ງເຫັນດີໃຫ້ເອື້ອຍທັງສອງໄປເປັນເມຍຂອງຊາຍ ສະຫລາດຄົນນັ້ນ ຊາຍສະຫລາດໄດ້ສອງຄົນໄປເຮັດເມຍກໍຍັງບໍ່ຄັກໃຈເພາະວ່າສອງຄົນນັ້ນບໍ່ຮູ້ເຮັດຮູ້ສ້າງຫຍັງຈຶ່ງຢາກໄດ້ຜູ້ທີ່ດີກ່ອນຫັ້ນ, ຍ້ອນແນວນັ້ນ ແມ່ຂອງຊາຍສະຫລາດຈຶ່ງເອົາເຂົ້າເມັດງາ (ເຂົ້າທີ່ເຫລົ້າງາຊ້າງເຮັດ) ໃຫ້ລູກຊາຍໄປຫາເມຍຖ້າຜູ້ໃດຫາກຫນຶ້ງເຂົ້າງາຊ້າງສຸກຜູ້ນັ້ນສົມຄວນເປັນເມຍເຈົ້າຫັ້ນແລ, ຊາຍສະຫລາດໄດ້ຖືເອົາພົກເຂົ້າຜ່ານໄປຫາຫລາຍບ້ານ ຫລາຍ

ເມືອງ ແຕ່ຍັງບໍ່ມີໃຜຫນຶ່ງເຂົ້າເມັດງານັ້ນສຸກໄດ້ ຈຶ່ງມາຮອດເຮືອນ ນາງຫລ້າຂອງຜູ້ເປັນເມຍຊາຍສະຫລາດແລ້ວກໍ່ເອົາເຂົ້າເມັດງາໃຫ້ນາງ ຫນຶ່ງນາງກໍນຳເຂົ້າໄວ້ ຕອນເຊົ້າມາກໍຫຍ້ຳເບິ່ງເຂົ້າເມັດງາບໍ່ເຫັນມັນໃນ່, ນາງຄິດວ່າແກງຊ້າງບໍ່ຫ່ອນເປື່ອຍງາ ແກງປາບໍ່ຫ່ອນເປື່ອຍກ້າງ, ນາງຈຶ່ງ ເອົາເຂົ້າເມັດງາໄວ້ແລ້ວກໍປ່ຽນເອົາເຂົ້າທຳມະດາຫນຶ້ງຍັດໃສ່ຕິບໃຫ້ຊາຍ ສະຫລາດ, ຊາຍສະຫລາດກໍ່ເອົາເຂົ້າຫນຶ້ງເມືອໃຫ້ແມ່ເບິ່ງ, ແມ່ກໍ່ຕົກລົງມາ ຂໍເອົານາງຫລ້າເມືອເຮັດເມຍຊາຍສະຫລາດ, ຊາຍສະຫລາດກໍໄດ້ພໍອົກພໍ ໃຈຕໍ່ນາງຫລ້າຫລາຍທີ່ສຸດ. ສ່ວນເອື້ອຍທັງສອງຜູ້ເປັນເມຍກົກກໍ່ພະຍາຍາມວາງແຜນທຳລາຍນ້ອງຕົນເອງຄິດຢ້ານວ່ານາງຫລ້າຈະດີລື່ນ, ເມື່ອຮອດມື້ ເອື້ອຍທັງສອງເຮັດກິນຈຶ່ງເຮັດແຕ່ແນວດີໆມີທັງຊີ້ນ, ປູ, ປາຫຸກຊະນິດທີ່ຜົວຫາ ມາໄດ້ຈົນເຕັມພາເຂົ້າ ຈົນວ່າຊີ້ນໃນຫິ້ງບໍ່ມີເຫລືອ ແລ້ວກໍ່ຍົກມາສູ່ຄອບຄົວ ກິນຫວັງຢາກໃຫ້ຜົວຍ້ອງ, ແຕ່ພໍຮອດມື້ນາງຫລ້າເຮັດກິນ ເອື້ອຍທັງສອງກໍໄປລັກຕຳແຈ່ວປາແດກໃສ່ພາເຂົ້າພ້ອມດ້ວຍຜັກຈົນເຕັມ, ພໍນາງຫລ້າເຂົ້າເຮືອນຄົວວ່າຈະເຮັດກິນພັດເຫັນພາເຂົ້າເຕັມຫມົດແລ້ວ ນາງຈຶ່ງຍົກອອກມາເລີຍເພື່ອກິນເຂົ້າ ຜູ້ເປັນເອື້ອຍທັງສອງກໍ່ສັບສໍ່ຕໍ່ຜົວວ່າ: ເບິ່ງແມ້ອ້າຍ, ນາງຫລ້າເຮັດກິນຕັ້ງບໍ່ເປັນຕາຢາກ, ບໍ່ມີຫຍັງເລີຍເປັນຕາກິນ, ມີແຕ່ແຈ່ວກັບຜັກ ໃຜຊິ ກິນລົງ, ອ້າຍລອງຄິດເບິ່ງດູວ່າ ນາງຫລ້າສົມຄວນຢູ່ນຳພວກເຮົາຢູ່ບໍ? ຊາຍ ສະຫລາດຈຶ່ງອະທິບາຍວ່າ: ຂອງກິນຊີ້ນປາຫາມາໄດ້ຍາກ ເຮົາກິນຟຸມເຟືອຍເວລາຢູ່ຊື່ໆ, ເວລາເຮັດວຽກເມື່ອຍເຮົາຈະກິນຫຍັງບັນເທົາຮ່າງກາຍໃຫ້ ຫາຍອິດຫາຍເມື່ອຍ, ອີກອັນຫນຶ່ງກິນຜັກກິນຫມີ້ຈັກຫ່ວາງຈັກຄາວກໍ່ເປັນການດີທີ່ໄດ້ປ່ຽນລົດຊາດຂອງອາຫານ. ເມື່ອໄດ້ຍິນແນວນັ້ນ ເອື້ອຍທັງສອງກໍຍິ່ງມີຄວາມກົ້ວໂກດໂກທາຄຽດແຄ້ນແຫນ້ນໃຈໃຫ້ແກ່ນາງຫລ້າ, ເມື່ອຮອດຍາມນາງຫລ້າ

ນ້ຽນມັດເຮືອນຊານເອື້ອຍທັງສອງກໍລັກນາງບ່ອນຢູ່ບ່ອນນອນຍາຍຢູ່ ຕາມເຮືອນຈົນເຕັມແລ້ວ ກໍໄປສັບສໍ່ຕໍ່ຜົວວ່າ: ເບິ່ງແມ້ ນາງຫລ້ານັ້ນມາງເຜບ່ອນຢູ່ບ່ອນນອນແລ້ວ, ນາງຄືນນີ້ມັນຊ່າງເຮັດຂວງ ແທ້ງໃດ, ອ້າຍບໍ່ຊັງມັນ ບໍ່? ຊາຍສະຫລາດກໍອະທິບາຍວ່າ: ບ່ອນຢູ່ບ່ອນນອນ ຖ້າມີແຕ່ນອນບໍ່ຕາກບໍ່ຕີ ບໍ່ລົ້ນບໍ່ເຜ ຈັກຫນ້ອຍຂີ້ເຂັບແມງງອດຈະກັດຈະຕອດບໍ່ຮູ້ເມື່ອ ນາງນ້າງ ໄປຕາກມັນກໍດີລະເດ, ເມື່ອ ໄດ້ຍິນແນວນັ້ນ ເອື້ອຍທັງສອງຍິ່ງເພີ່ມຄວາມ ຄຽດຈົນຫາອັນປຽບບໍ່ໄດ້, ຄັນຮອດມື້ເອື້ອຍທັງສອງນ້ຽນມັດເຮືອນ ເອື້ອຍທັງສອງກໍເອົາຂັນຫມາກໄປຖອກ, ເອົາໂຮງກະບອງໄປພັດ, ເອົາຂີ້ຊີໄປພັດ, ເຮັດໃຫ້ຂີ້ຊີຊຸຈົນຊອດກະປ່ອງກະແປ່ງ ເມື່ອຊາຍສະຫລາດມາເຫັນກໍ່ຮ້າຍໃສ່ເມຍກົກທັງສອງວ່າ: ພວກເຈົ້າທັງສອງຫາກບໍ່ຮູ້ຫຍັງຫມົດ ຖອກຂັນຫມາກພິດ ຮີດພິດຄອງ, ເທໂຮງກະບອງພິດຄອງປູ່ຍ່າ ຊ້ຳບໍ່ພໍ ຄຸນາກໍເຈາະໃຫ້ມັນ ຊອດຫມົດບໍ່ຄວນໃຫ້ເປັນພັນລະຍາຜູ້ເຖົ້າເລີຍ. ເຫດການດັ່ງກ່າວເຮັດໃຫ້ ເອື້ອຍທັງສອງບໍ່ພໍໃຈຕໍ່ນາງຫລ້າຍິ່ງຂຶ້ນ, ຄັນຢູ່ມາຍາມຫນຶ່ງ ພະຍາເມືອງກໍມີ ພະລາດຊະອົງການ ໃຫ້ຊາຍສະຫລາດໄປສະນ້ຳຂອງໃຫ້ແທງພາຍໃນເຈັດ ວັນຄັນບໍ່ແທງຈະເອົາເມຍຜູ້ຫລ້າໄປຢູ່ຊ້ອນ, ນັດວ່າວັນຖ້ວນເຈັດໃຫ້ກຽມ ເຄື່ອງໄປໃຫ້ຮອດທ່ານາ້. ຄຳສັ່ງດັ່ງກ່າວ ເຮັດໃຫ້ຊາຍສະຫລາດຫມົດປັນຍາ ຄິດແລະເມຍທັງສອງຜູ້ເຖົ້າໄດ້ໂອກາດກໍຍັງສັບສໍ່ຕໍ່ຜົວວ່າ: ເບິ່ງແມ້ ນາງຫລ້າມັນບໍ່ອຸກບໍ່ອັ່ງຫຍັງ ມັນບໍ່ຫ່ວງບໍ່ໃຍນຳອ້າຍເພາະມັນຈະໄດ້ໄປເປັນເມຍ ພະຍາ, ປານນັ້ນ ຜ່ານມາອ້າຍພັດຍ້ອງຍໍແຕ່ມັນ, ສ່ວນນາງຫລ້າກໍຕາ່ຫູກເສີຍ ຢູ່ຜ່ານມາຮອດວັນຖ້ວນ 6 ແລ້ວ ຜູ້ເປັນຜົວມີແຕ່ໃຫ້ນ້ຳຕາອາບແກ້ມ ເມັຍກົກທັງສອງກໍມີແຕ່ຍິ້ມຫົວ ເພາະດີໃຈ ນ້ອງຈະໄດ້ຫນີຈາກ, ບາງທີກໍໄຫ້ນຳ ຜົວຢາກໃຫ້ຜົວວ່າພວກເພິ່ນຮັກຜົວ ແລະເວົ້າກັບຜົວວ່າ: ອ້າຍຢ່າໄປໄຫ້ໃຫ້ເສຍ

ນ້ຳຕານ່າ ພວກນ້ອງຍັງຢູ່ທັງສອງຄົນລະ ສ່ວນນາງຫລ້າມັນບໍ່ໄດ້ຮັກ ອ້າຍ ອ້າຍລອງໄປຖາມມັນເບິ່ງດູ ຜູ້ເປັນຜົວກໍ່ຖາມເມຍນ້ອຍຜູ້ຫລ້າວ່າ: ນ້ອງບໍ່ໄດ້ ຮັກອ້າຍແມ່ນບໍ? ນ້ອງບໍ່ເຫັນຄິດເຮັດຫຍັງຊ່ວຍອ້າຍເລີຍ, ນາງຫລ້າກໍ ຕອບ ໄປວ່າ: ຮັກຢູ່ ແຕ່ຈະເຮັດແນວໃດ, ມີແຕ່ໃຫ້ອ້າຍກຽມກະໂຊ້ສະນ້ຳໄວ້. ຜົວ ຈຶ່ງຖາມຄືນວ່າ: ກະໂຊ້ນ້ອຍໆນີ້ຫວະຈະສະນ້ຳຂອງແຫ້ງ? ນາງຕອບວ່າ: ເອົາ ໄວ້ເປັນພາລະຂອງນ້ອງກໍແລ້ວກັນ, ຄັນຮອດມື້ນັດຫມາຍຄອບຄົວຊາຍ ສະ ຫລາດກໍໄປຮອດທ່ານ້ຳ, ພະຍາເມືອງກໍອອກຄຳສັ່ງວ່າ: ເອົາສະໄດ້ ເລີຍ ເຈັດວັນໃຫ້ແຫ້ງ, ຊາຍສະຫລາດກໍສິ້ນທິດໆ ປາກກໍ່ບໍ່ອອກມີແຕ່ນາງຫລ້າ ແຢ່ ກະໂຊ້ເຂົ້າໄປໃກ້ໆກັບພະຍາແລ້ວກໍ່ຖາມຄືນວ່າ: ຂ້າແຕ່ອັນຍາ, ອັນຍາ ປ້ານ ນ້ຳແລ້ວບໍ່? ພະຍາກໍ່ຫົວອັກໆຂຶ້ນ ທັງເວົ້າວ່າ: ນາງຫລ້າຢາກໃຫ້ເປັນ ນາງ ພະຍາຍັງບໍ່ດີ ຍັງຈະຄິດຊ່ວຍເຂົາຢູ່ກໍໄດ້, ພະຍາເມືອງເວົ້າຕໍ່ໄປອີກ ວ່າ: ເຈົ້າມັນບໍ່ແມ່ນດູຖູກກູໄປແລ້ວບໍ່ ຫລືເຈົ້າບໍ່ຮູ້ກ່ຽວກັບອັນຍາ ແຕ່ເກີດມາ ບໍ່ ເຄີຍປຽບຄົນ ແລ້ວຍັງຈະໃຫ້ບາຍຄົນ ໄປປ້ານນ້ຳໃຫ້ພວກເຈົ້າອີກຫວະ? ນາງ ຈຶ່ງເວົ້າຕໍ່ໄປອີກວ່າ: ຄັນອັນຍາບໍ່ປ້ານ ຂ້ານ້ອຍສະຂຶ້ນມານີ້ມັນຈະບໍ່ຖ້ວມ ພະ ລາດສະວັງອາດຍາບໍ? ພະຍາຢາກຮ້າຍທີ່ນາງປຽບຫຍາມດ້ວຍຄວາມເວົ້າຈຶ່ງ ໄດ້ເວົ້າຄວາມຈິງອອກມາວ່າ: ກູຈະມີປັນຍາປ້ານນ້ຳໃຫ່ຍບໍ່ໃຫ່ຍໄດ້ຄື ແນວ ໃດ? ນາງຈຶ່ງຕອບຄືນໄປວ່າ: ຂ້າແຕ່ອັນຍາ ເມື່ອອັນຍາປ້ານບໍ່ໄດ້ແລ້ວເຫດ ໃດຝູງຂ້າຈະສະໄດ້, ພະຍາກໍ່ຫົວເຍາະເຍີ້ຍໄປວ່າ: ເພາະເຈົ້າມັນ ງາມ! ເພາະເຈົ້າມັນສະຫລາດມັນຈຶ່ງຕ້ອງໄດ້ພະຍາຈຶ່ງຖຽງນາງດ້ວຍຄວາມ ເວົ້າ ຫລາຍແນວ, ໃນທີ່ສຸດນາງກໍ່ອອກຄຳເຫັນໃຫ້ພະຍາເມືອງ ເຊີນພະຍາ ທັງ ຫລາຍມາພິຈາລະນາເບິ່ງວ່າ ໃຜຜິດໃຜຖືກ ຫລືຄວນເຮັດແນວໃດ? ໄດ້ ໂອ ກາດເມຍກົກທັງສອງກໍສັບສໍ່ຜົວອີກວ່າ: ນາງຄົນນີ້ຊ່າງຫນ້າດ້ານແທ້ໆ ຖຽງ

ຮອດອັນຍາ ແລ້ວອ້າຍຈະຫວງນາງໄວ້ເຮັດຫຍັງອີກ?ສ່ວນຜົວກໍມີແຕ່ໄຫ້ ບໍ່ປາກຫຍັງຫມົດ, ເມື່ອພະຍາທັງຫລາຍມາຮອດ ກໍ່ອອກຄຳເຫັນຄືກັນຫມົດວ່າ: ນາງເວົ້າຖືກແລ້ວ ພະຍາເມືອງມີເສນາອາມາດ ມີປະຊາລາດເຕັມ ເມືອງຍັງປ້ານນ້ຳບໍ່ໄດ້ ແລ້ວເຫດໃດ ພວກເຂົາຄອບຄົວດຽວຈະສະນ້ຳແຫ້ງ ໄດ້ ພະຍາທັງຫລາຍເຫັນວ່ານາງສະຫລາດຈຶ່ງຕັດສິ່ງປົດຕຳແຫນ່ງພະຍາ ເມືອງແລ້ວເອົາທ້າວສະຫລາດຂຶ້ນຄອງເມືອງ ແລະຍົກນາງຫລ້າເປັນມະເຫ ສີເຫງົ້າ ສ່ວນນາງທັງສອງຜູ້ເປັນເອື້ອຍ ໃຫ້ເປັນທາດຮັບໃຊ້ນາງຫລ້າ ຕາມຄວາມຕ້ອງການຂອງນາງທຸກສິ່ງຢ່າງນັບແຕ່ນັ້ນຫັ້ນແລ !

# ກຳພ້າປາບຍັກ

*ສາຍສະໜອນ ຂຽວທອງຄູນ

ຍັງມີເມືອງໜຶ່ງຊື່ເມືອງ ເພຍລາດ. ມີພະຍາຊື່ ສຸລັດ. ພະຍາມີເມຍ ຊື່ ຈັນທາ ແລະ ລູກສາວທີ່ມີຄວາມງາມກວ່າທຸກຄົນ ມີຊື່ວ່າ ສຸດາ.

ປະຊາຊົນໃນເມືອງ ເພຍລາດ ຢູ່ຢ່າງມີຄວາມສຸກ ເພາະພະຍາສຸລັດປົກຄອງເມືອງຢ່າງເປັນທຳ.

ມື້ໜຶ່ງເລື່ອງທີ່ບໍ່ຄາດຄິດກໍ່ເກີດຂຶ້ນ ມີຍັກໂຕໜຶ່ງມາຈັບຄົນຢູ່ນອກເມືອງເພຍລາດກິນ, ເຮັດໃຫ້ປະຊາຊົນທີ່ຢູ່ນອກເມືອງເພຍລາດຢ້ານ ຈຶ່ງພາກັນຍົກຍ້າຍໄປຢູ່ໃນເມືອງ, ບາງຄອບຄົວກໍ່ຍ້າຍໄປຢູ່ເມືອງອື່ນ.

ເມື່ອພະຍາສຸລັດໄດ້ຮູ້ຂ່າວຍັກທີ່ມາຈັບຄົນຢູ່ນອກເມືອງກິນ, ຈຶ່ງສັ່ງທະຫານອອກໄປປາບ, ແຕ່ກໍ່ຖືກຍັກຈັບກິນຈົນໝົດ ຈົນບໍ່ມີຜູ້ໃດສາມາດອອກໄປ ປາບຍັກເລີຍ.

ກ່າວເຖິງກຳພ້າ ທີ່ອາໄສຢູ່ກັບແມ່ເຖົ້າ. ກຳພ້າເປັນຄົນທີ່ກ້າຫານ ແລະ ກໍ່ຍັງດຸໝັ່ນເຮັດວຽກຊ່ອຍແມ່ເຖົ້າ ສະນັ້ນແມ່ເຖົ້າຈຶ່ງຮັກກຳພ້າຫລາຍ.

ຄືນໜຶ່ງກຳພ້າໄດ້ຝັນເຫັນພະຍາແຖນ ເອົາທະນູວິເສດມາໃຫ້, ແລະ ກໍ່ເວົ້າກັບກຳພ້າວ່າ:

"ກຳພ້າເອີຍ! ເຈົ້າເປັນຄົນດີຫລາຍ, ເຈົ້າຊ່ອຍເບິ່ງແຍງແມ່ເຖົ້າ. ດ້ວຍຄວາມເອົາໃຈໃສ່ ແລະ ກໍ່ມີຄວາມກະຕັນຍູຕໍ່ຜູ້ທີ່ມີບຸນຄຸນກັບເຈົ້າ, ເອົາ ລະ

ເພື່ອຕອບແທນຄວາມດີຂອງເຈົ້າ ຂ້ອຍຂໍມອບທະນູວິເສດນີ້ໃຫ້ກັບເຈົ້າ, ແລະຈົ່ງຊ່ອຍໄປປາບຍັກ ເພື່ອໃຫ້ຊາວບ້ານຊາວເມືອງໄດ້ຢູ່ເຢັນເປັນສຸກ, ຍັກໂຕນີ້ຈຸດອ່ອນຂອງມັນຢູ່ທີ່ຄໍເດີ"

ກ່ຳພ້າເວົ້າຂຶ້ນວ່າ: ໂດຍ! ຂ້ານ້ອຍຂໍໃຫ້ສັນຍາວ່າຈະປາບຍັກໂຕນີ້ ໃຫ້ໄດ້"

ພະຍາແຖນ: "ດີ, ຂໍໃຫ້ເຈົ້າຈົ່ງໂຊກດີ". ແລ້ວພະຍາແຖນກໍຫາຍໂຕ ໄປ

ເມື່ອກ່ຳພ້າຕື່ນຂຶ້ນມາກໍແປກໃຈຫລາຍ ເມື່ອເຫັນທະນູວິເສດຢູ່ຂ້າງ ຕົນເອງພ້ອມດ້ວຍລູກສອນຄືກັບຄວາມຝັນ. ກ່ຳພ້າຈັບເອົາທະນູຂຶ້ນມາ ແລ້ວເວົ້າຂຶ້ນວ່າ:

" ຖ້າບຸນຂອງຂ້ານ້ອຍມີແທ້ ຂໍໃຫ້ປາບຍັກໄດ້ ແລະຂໍໃຫ້ຊື່ສຽງຂອງ ຂ້ານ້ອຍດັງໄປທົ່ວທຸກມຸມເມືອງຕ່າງໆ ດ້ວຍເທີ້ນ".

ຫລັງຈາກທີ່ກ່ຳພ້າກິນເຂົ້າອີ່ມແລ້ວ, ກໍກຽມໂຕເດີນທາງມຸ່ງຫນ້າໄປ ຫາຍັກທັນທີ ກ່ຳພ້າເຫັນຍັກກຳລັງຊອກກິນຄົນຢູ່ ຈຶ່ງຮ້ອງໄປໃສ່ວ່າ:

" ຢຸດກ່ອນທ່ານພະຍາຍັກ ເປັນຫຍັງທ່ານຈຶ່ງມາຈັບຜູ້ຄົນຢູ່ນອກເມືອງ ນີ້ກິນ, ທ່ານບໍ່ຮູ້ສຶກຢ້ານບາບແດບໍ່"

ຍັກໃຈຮ້າຍຫລາຍທີ່ເຫັນເດັກນ້ອຍມາເວົ້າອວດດີໃສ່ຕົນ ຈຶ່ງຮ້ອງຂູ່ ໄປວ່າ:

" ເຮີຍບັກນ້ອຍ, ເຈົ້າແມ່ນໃຜ ບໍ່ຮູ້ສຶກຢ້ານຕາຍເລີຍບໍ, ດີ, ກະດູກອ່ອນໆຄືກັບເຈົ້າ ຄົງຈະແຊບຫລາຍແທ້ໆນໍ"

ແລ້ວຍັກກໍໃຊ້ມືໄລ່ຈັບກ່ຳພ້າຫວັງຈະໄດ້ກິນເປັນອາຫານ, ແຕ່ກໍຈັບບໍ່ ໄດ້ຈັກເທື່ອເພາະກ່ຳພ້າຫລົບຫລີກໄດ້ວ່ອງໄວຫລາຍ, ຍັກແຮ່ງໃຈຮ້າຍຫລາຍຈຶ່ງເສກເອົາກະບອງອອກມາແລ້ວກໍຟາດໄປໃສ່ກ່ຳພ້າຫວັງຈະໃຫ້ກ່ຳພ້າຕາຍແຕ່

ກ່ຳພ້າກໍ່ຫລົບຫລີກໄດ້ຢ່າງວ່ອງໄວ.

ກ່ຳພ້າໃຈຮ້າຍຈຶ່ງຮ້ອງໃສ່ຍັກວ່າ: "ເຮີຍ! ທ່ານຍັກ ເວົ້າດີໆບໍ່ ຍອມຟັງ, ຖ້າຈັ່ງຊັ້ນກໍ່ຕາຍສະເຫາະ". ກ່ຳພ້າຍິງສອນໄປ ກາຍເປັນກົງຈັກໄປຕັດກະບອງຂອງຍັກຂາດເຄິ່ງ ແລ້ວເລີຍໄປຕັດຄໍຂອງຍັກລົ້ມລົງຕາຍກັບບ່ອນ.

ເລືອດຂອງຍັກຟົ້ງໄປທົ່ວທຸກແຫ່ງ ຕົກລົງນ້ຳກາຍເປັນ ປີງ, ເປັນ ທາກເປັນຍຸງຫາດູດກິນເລືອດຄົນເທົ່າທຸກມື້ນີ້.

ສ່ວນໂຕຂອງຍັກກໍ່ກັບກາຍເປັນພູ, ຫົວຂອງຍັກກໍ່ກາຍເປັນຕົ້ນໄມ້ເທົ່າ ທຸກມື້ນີ້.

ຂ່າວກ່ຳພ້າຂ້າຍັກໄດ້ຍິນໄປເຖິງຫູຂອງທ່ານພະຍາສຸລັດ, ພະຍາຈຶ່ງມີ ຮັບສັ່ງໃຫ້ນຳກ່ຳພ້າມາພົບ ແລະ ໄດ້ມອບລູກສາວ ຄືນາງ ສຸດາ ໃຫ້ເປັນເມຍພ້ອມທັງຕັ້ງຊື່ໃຫ້ທ້າວໃຫມ່ວ່າ: ທ້າວດາວັນ, ຢູ່ຕໍ່ມາບໍ່ດົນ ພະຍາສຸລັດກໍ່ ລົ້ມປ່ວຍລົງແລະກໍ່ຕາຍ ເພາະຄວາມເຖົ້າ, ທ້າວດາວັນຈຶ່ງຂຶ້ນຄອງເມືອງ ເປັນພະຍາແທນ, ແລະຊື່ສຽງກໍ່ດັງໄປທົ່ວທຸກເມືອງ ໃຜໄດ້ຍິນຊື່ກໍ່ຍໍມືສາທຸນຳ.

ນັບຕັ້ງແຕ່ນັ້ນມາ ປະຊາຊົນກໍ່ຢູ່ຮ່ວມກັນຢ່າງມີຄວາມສຸກ ໂດຍບໍ່ມີສັດ ຕູ ກ້ານາຮຸກຮານຈັກເທື່ອ ເພາະຢ້ານບຸນທ້າວດາວັນ.

# ຄົນປາກບອນ

* ກິດສະໜາ ສິງຫາລາດ

ໃນເມື່ອກ່ອນ, ສະໄໝປະເທດລາວລ້ານຊ້າງຮຸ່ງເຮືອງເຫລືອງ ເຫລື້ອມ ໄພພ້າປະຊາຊົນຢູ່ຊຸ່ມກິນເຢັນ, ພູ້ຄົນມີຄວາມເຫລື້ອມໃສສັດທາໃນພະພຸດ ທະສາສະໜາ ຍອມມີເຈົ້າຟ້າພະຍາເມືອງຢູ່ໃນສິນກິນໃນທຳ ບໍ່ຂູດຮີດແລະຂົ່ມເຫັງປະຊາຊົນ, ສະນັ້ນ ໃພ່ໆ ກໍ່ເຄົາລົບນັບຖືແລະຮັກແພງພະຍາເມືອງຂອງຕົນເປັນຢ່າງຍິ່ງ, ຢູ່ມາມື້ໜຶ່ງ ພວກຊາວບ້ານໄດ້ຍິນຂ່າວວ່າ: ພະຍາ ເມືອງຈະລົງມາຢ້ຽມຢາມໃນໝູ່ບ້ານຂອງຕົນ ເບິ່ງໃຜກໍ່ຫາງຫາກະກຽມ ເຄື່ອງຕ້ອນຂອງຝາກອັນມີ ກວຍ, ອ້ອຍ, ເຄື່ອງສົມຂອງຫວານນາໆພັນ ໄວ້ຄອຍຕ້ອນຮັບ, ແຕ່ວ່າ, ພະຍາເມືອງເພິ່ນບໍ່ຄ່ອຍສົນໃຈຫລາຍປານໃດ ເພິ່ນໄດ້ລົງຍ່າງເລາະໄປຢ້ຽມຢາມປະຊາຊົນຂອງເພິ່ນແຕ່ລະຫລັງຄາເຮືອນ ພໍເພິ່ນ ເລາະໄປພົບແມ່ຍິງຮາມ(ອາຍຸປະມານ 40 ປີ ) ຄົນໜຶ່ງເຊິ່ງກຳລັງຕຳ ເຂົ້າຢູ່ພໍດີ ເພິ່ນກໍ່ເລີຍຄຶດໄດ້ວິທີປຸງອາຫານຊະນິດໜຶ່ງຂຶ້ນມາທັນທີ ເພິ່ນກໍ່ ເລີຍສັ່ງໃຫ້ເສນາອົງຄະລັກໄປແນະນຳວິທີປຸງແຕ່ງຕໍ່ແມ່ຍິງຮາມຄົນນັ້ນວ່າ:

– ພະຍາເມືອງຂອງພວກເຮົາເພິ່ນຢາກກິນ ໜົມກຣຳ ເຈົ້າສາມາດເຮັດໄປທູນໃຫ້ແກ່ເພິ່ນໄດ້ບໍ?

ເມື່ອແມ່ຍິງຮາມຄົນນັ້ນໄດ້ຮັບຄຳສັ່ງ ກໍ່ບໍ່ກ້າປະຕິເສດ ຈຶ່ງຂໍຮັບເອົາ ທັນທີໂລດວ່າ:

- ຖ້າຫາກເປັນຄວາມປະສົງຂອງເພິ່ນ ຜູ້ຂ້າກໍ່ຈະເຮັດໄປຖວາຍໃນຕອນແລງຂອງມື້ນີ້. ນອກນັ້ນ ເສນາອົງຊະລັກ ຍັງໄດ້ມີຄຳສັ່ງຢ່າງໜັກແໜ້ນວ່າ

- ເລື່ອງເຮັດໝົກຣຳນີ້ ເຈົ້າຕ້ອງຮັກສາໄວ້ເປັນຄວາມລັບເນີ ຫ້າມ ບໍ່ໃຫ້ໄປເວົ້າສູ່ໃຜຟັງເດັດຂາດ.

ເມື່ອຍິງຣາມຄົນນັ້ນໄດ້ຕົກລົງແລະສັນຍາກັບເສນາອົງຊະລັກແລ້ວ ລາວກໍ່ໄປຊອກຫາເອົາໝາກກ້ວຍສຸກດີມາໜຶ່ງຫວີ ແລະກໍ່ຮ່ອນເອົາຣຳອ່ອນ ໆ ຈົນໄດ້ຕາມຄວາມພໍໃຈແລ້ວກໍ່ປອກເອົາກ້ວຍມາຄັ້ນປະສົມໃຫ້ເຂົ້າກັນດີ ແລ້ວກໍ່ເອົາໃບຕອງມາຫໍ່ໃຫ້ເປັນໝົກຢ່າງດີແລ້ວກໍ່ນຳໄປໝົກໃສ່ໄຟອ່ອນໆ ຈົນວ່າສຸກພໍດີກິນແລະມີກິ່ນຫອມຕາມຕ້ອງການແລ້ວ ລາວຈຶ່ງນຳຂຶ້ນຖວາຍໃຫ້ແກ່ພະຍາເມືອງຂອງຕົນດ້ວຍຕົນເອງທຸກຢ່າງ, ເມື່ອພະຍາໄດ້ກິນໝົກຣຳ ແລ້ວເພິ່ນກໍ່ຍ້ອງວ່າແມ່ຍິງຣາມຄົນນັ້ນ ປຸງແຕ່ງໄດ້ແຊບຫລາຍ ເພິ່ນຈຶ່ງມອບລາງວັນໃຫ້ຢ່າງງາມແກ່ຍິງຣາມຄົນນັ້ນ.

ເມື່ອແມ່ຍິງຣາມຄົນນັ້ນກັບເມືອຮອດເຮືອນຂອງລາວແລ້ວ ລາວກໍ່ຍັງ ຄິດບໍ່ເລີກບໍ່ແລ້ວ ກ່ຽວກັບເລື່ອງພະຍາກິນຣຳຄື ໝູ;ທັງທີ່ວ່າເພິ່ນກໍມີເງິນ ຄຳບໍ່ອຶດບໍ່ຢາກ. ຍ້ອນຄິດຫລາຍໃນຄືນນັ້ນລາວຈຶ່ງນອນບໍ່ຫລັບໝົດຄືນປະກອບກັບກະໂຕລາວ ກໍ່ເປັນຄົນເວົ້າຂວັນນິນທາແດ່ ຈຶ່ງເຮັດໃຫ້ລາວຢູ່ບໍ່ໄດ້ກິນບໍ່ເປັນ ລາວຍິ່ງຄິດກໍ່ຍິ່ງກະວົນກະວາຍໃຈຫລາຍຍິ່ງຂຶ້ນ, ດັ່ງພາສິດເວົ້າວ່າ: " ຄົນເຄີຍຫ່ຽວ ບໍ່ຫ່ຽວມັນນອນ ຄົນເຄີຍນອນ ບໍ່ນອນມັນໄຂ້ ຄົນຂີ້ໄຮ້ ບໍ່ຈື່ມ ມັນຕາຍ". ເມື່ອມັນອົດບໍ່ລົມທົນບໍ່ໄດ້ ລາວຈຶ່ງຕັດສິນໃຈແລ່ນເຂົ້າໄປປ່າແລ້ວໄປຢືນເວົ້າກັບຕົ້ນໄມ້ໃຫຍ່ຕົ້ນໜຶ່ງວ່າ:

- ໂອຍ! ຕົ້ນໄມ້ໃຫຍ່ໃບດົກເອີຍ! ອັນຜູ້ຂ້າເກີດມາຊາດນີ້ ກໍ່ເຫັນແຕ່ພະຍາເມືອງເຮົານີ້ແຫລະກິນຣຳຄືໂຕໝູ ນີ້ນາ.

ເມື່ອໄດ້ເວົ້າລະບາຍອອກສູ່ຕົ້ນໄມ້ຟັງແລ້ວ ລາວຄືຮູ້ສຶກສວ່າງໝົກສວ່າງໃຈຫລາຍເປັນທີ່ສຸດ.

ບາດນີ້ ມາຍ້ອນກ່າວເຖິງຊາວບ້ານພາຍຫລັງໄດ້ຕົກລົງເປັນເອກະ ພາບກໍ່ພາກັນແບກພ້າແບກຂວານເຂົ້າປ່າ ເພື່ອໄປຊອກໄມ້ມາເຮັດກອງເພນ ກໍ່ເລີຍໄປພໍ້ຕົ້ນໄມ້ໃຫຍ່ບ່ອນເຊິ່ງແມ່ຍິງຮາມຄົນນັ້ນໄດ້ໄປຈົ່ມໃສ່ຕົ້ນພໍດີ ພວກເຂົາກໍ່ເລີຍປ້ຳລົງທັນທີ ແລ້ວແກ່ເຂົ້າມາວັດ, ພ້ອມກັນເສາະເຈາະໃຫ້ ເປັນກອງເພນແລະກໍ່ແລ້ວໃນເວລາຕໍ່ມາ ຈຶ່ງໄດ້ຈັດພິທີເອົາກອງຂຶ້ນຫໍຕາມປະເພນີ ເຊິ່ງໄດ້ເຊີນເອົາຜູ້ຫລັກຜູ້ໃຫຍ່ມາຮ່ວມພິທີຢ່າງຄັບຄາໜາແໜ້ນ ເມື່ອເພິ່ນເລີ່ມຕີກອງ ກໍ່ປະກົດວ່າມີສຽງແປກຫູເກີດຂຶ້ນແລະໃຜໆກໍ່ປະຫລາດ ໃຈເມື່ອໄດ້ຍິນສຽງກອງດັງວ່າ : ຮຳ ໆ ໆ ໆ.

ຊາວບ້ານຕ່າງກໍ່ພາກັນໂສເຫລັກັນອຶກກະທຶກວ່າ: ເປັນຫຍັງສຽງກອງ ຈຶ່ງດັງແບບນີ້ ໂອຍ! ຢ້ານບ້ານເມືອງຊິມີເຫດຮ້າຍຕ່າງໆນາໆ, ເລື່ອງນີ້ຈຶ່ງຮອນໄປຮອດຫູຂອງພະຍາເມືອງສາແລ້ວ ເພິ່ນຈຶ່ງສັ່ງການໃຫ້ເສນາໄປນຳຕົວແມ່ຍິງຮາມຄົນນັ້ນເຂົ້າມາພົບແລ້ວກໍ່ສອບຖາມວ່າ:

- ຕ້ອງແມ່ນເຈົ້າແນ່ນອນ ທີ່ໄປໄຂຄວາມລັບສູ່ຕົ້ນໄມ້ໃຫຍ່ ທີ່ເຂົາ ເອົາມາເຮັດກອງເພນນັ້ນວ່າເຮົາພະຍາກິນໝົກຮຳ ແມ່ນບໍ່?

ຍິງຮາມຄົນນັ້ນກໍ່ເລີຍຕອບວ່າ:

- ຂໍແຕ່ອາຍາໂພດຊີວິດແດ່ທ້ອນພູ້ຂ້າກໍ່ໄດ້ເວົ້າກັບຕົ້ນໄມ້ໃຫຍ່ແທ້ ເພາະພະຍາສັ່ງໄວ້ວ່າບໍ່ໃຫ້ເວົ້າສູ່ຄົນຟັງຢ່າງເດັດຂາດ.

ເມື່ອເປັນດັ່ງນັ້ນແລ້ວ, ພະຍາກໍ່ອອກຄຳສັ່ງຈັບຍິງຮາມຄົນນັ້ນໄປຂັງຢູ່ ຄຸກຕະຫລອດຊີວິດເພື່ອບໍ່ໃຫ້ເລື່ອງນີ້ແພ່ພາຍອອກໄປໃຫ້ໃຜຮູ້ຕື່ມອີກຈົນເທົ່າ ທຸກວັນນີ້.

ຈັ່ງຊັ້ນແຫລະ ຄົນເຮົາຖ້າບໍ່ຮູ້ຕໍ່ຮູ້ສູງ ບໍ່ຮູ້ອັນໃດຄວນເວົ້າຄວນເຮັດ ກໍ່ຈະເປັນດັ່ງແມ່ຍິງຮາມຄົນນີ້ແລ້ວ ດັ່ງສຸພາສິດກ່າວໄວ້ວ່າ: "ໄວປາກເສຍສິນ ໄວຕີນຕົກຕົ້ນໄມ້" ນັ້ນແລ .

# ເຂີຍຫລ້າປັນຍາແຫລມ

* ຄຳໃສ

ທີ່ເຮືອນຫລັງຫນຶ່ງມີພໍ່ເຖົ້າຄົນຫນຶ່ງກັບລູກສາວລູກເຂີຍສອງຄູ່, ຄັນຢູ່ໄປນຳກັນດົນສົມຄວນຈຶ່ງຄິດຢາກໃຫ້ລູກເຂີຍອອກເຮືອນ, ແຕ່ຄັ້ນຖາຈະອອກພ້ອມກັນຫມົດເທື່ອດຽວພັດຢ້ານບໍ່ທັນພຽງພໍເພາະວ່າຖານະຂອງຕົນກໍບໍ່ດີປານໃດ, ພໍ່ເຖົ້າຈຶ່ງຢາກທົດສອບເບິ່ງວ່າລູກເຂີຍສອງຄົນ ຜູ້ໃດຈະມີປັນຍາດີກ່ອນ ກັນ ຖ້າຫາກຜູ້ໃດປັນຍາດີ ຜູ້ນັ້ນຈະໄດ້ອອກເຮືອນກ່ອນ, ພໍ່ເຖົ້າກໍຮ້ອງລູກເຂີຍທັງສອງມາຫາແລ້ວກໍເວົ້າວ່າ:

ລູກທັງສອງຢູ່ນຳພໍ່ມາກໍດົນສົມຄວນແລ້ວ ພໍ່ຈຶ່ງຄິດວ່າລູກຄວນອອກ ເຮືອນອອກຊານເສັຍແຕ່ພໍ່ຈະໃຫ້ຜູ້ຫນຶ່ງອອກກ່ອນ ແລ້ວມື້ອື່ນພໍ່ຈະລອງປັນຍາ ເບິ່ງວ່າໃຜສົມຄວນອອກ.

ພໍຮອດມື້ໃຫມ່ມາ ພໍ່ເຖົ້າກໍພາລູກເຂີຍສອງຄົນເຂົ້າໄປສູ່ປ່າ ເມື່ອໄປຮອດກໍ່ໄຜ່ ພໍ່ເຖົ້າກໍຖາມລູກເຂີຍວ່າ:ຫນໍ່ໄມ້ນີ້ເຫດໃດມັນຈຶ່ງພົ້ນຈາກດິນອອກ ມາໄດ້? ລູກເຂີຍຜູ້ກົກກໍຕອບໄປວ່າ:ກໍຍ້ອນວ່າປາຍມັນແຫລມ.ພໍ່ເຖົ້າກໍເວົ້າວ່າໂອ!ມັນເກັ່ງເນາະ,ບັກຫລ້າເດ?ລູກເຂີຍກໍຕອບວ່າ:ມັນເປັນຂອງທຳ ມະຊາດ,ລູກເຂີຍກົກກັບພໍ່ເຖົ້າກໍຫົວຂວັນແລ້ວເວົ້າວ່າ:ບໍ່ແມ່ນຍ້ອນປາຍ ມັນແຫລມບໍ? ລູກເຂີຍຫລ້າຈຶ່ງເວົ້າໄປວ່າ:ບາດເຫັດລະໂງກຫັ້ນເດປາຍມັນ ບໍ່ແຫລມມັນຍັງອອກມາໄດ້.ພໍ່ເຖົ້າກໍເວົ້າວ່າ:ໂອ!ແມ່ນຄວາມໃດ໋.ແລ້ວກໍ ພາ

ກັນເດີນທາງໄປເຫັນເປັດລອຍນ້ຳຢູ່, ພໍ່ເຖົ້າກໍຖາມຂຶ້ນວ່າ: ເປັນດ້ວຍເຫດໃດມັນຈຶ່ງຟູນ້ຳໄດ້? ລູກເຂີຍກືກຈຶ່ງຕອບໄປວ່າເພາະມັນມີນ້ຳມັນຫລາຍ ພໍ່ ເຖົ້າກໍວ່າ: ໂອ່! ບັກກືກມັນຕອບເກັ່ງເນາະຕອບກ່ອນອີກ.

ບັກຫລ້າເດ? ມາຄືນິດແທ້? ລູກເຂີຍຫລ້າກໍວ່າ: ມັນເປັນຂອງທຳມະຊາດ ພໍ່ເຖົ້າກໍເວົ້າຮ້າຍໄປວ່າ: ທຳມະຊາດພໍ່ມຶງບໍ່? ຄັນມັນບໍ່ມີນ້ຳມັນເຫດໃດມັນ ຊິຟູໄດ້, ລູກເຂີຍຫລ້າຈຶ່ງແກ້ໄປວ່າ: ບາດຂອນໂຄສາຫັ້ນເດ ມັນບໍ່ມີນ້ຳມັນ ເຫດໃດມັນຈຶ່ງຟູໄດ້, ພໍ່ເຖົ້າກໍເວົ້າວ່າ : ໂອ! ແມ່ນຄວາມມັນເນາະ, ແລ້ວກໍພາກັນໄປບ່ອນໃຫມ່ອີກພໍໄປຮອດທ່ານ້ຳກໍເຫັນຜູ້ສາວອາບນ້ຳຢູ່ ພໍ່ເຖົ້າກໍຖາມຂຶ້ນໄປວ່າ: ຜູ້ສາວນີ້ເຫດໃດເຂົ້າຈຶ່ງຂາວແທ້ໆ? ລູກເຂີຍກືກກໍຕອບກ່ອນ ອີກວ່າ: ຍ້ອນເຂົ້ານຸ່ງສິ້ນມາແຕ່ນ້ອຍແມ່ນບໍ່ພໍ່? ພໍ່ເຖົ້າກໍງຶກຫົວເຫັນພ້ອມ ນຳແລ້ວກໍຖາມລູກເຂີຍວ່າ : ມຶງເດບັກຫລ້າ? ລູກເຂີຍກໍຕອບໄປວ່າ: ຍ້ອນວ່າຂອງທຳມະຊາດພາເປັນ, ພໍ່ເຖົ້າກໍຮ້າຍໃສ່ວ່າ: ບັກທຳມະຊາດເອີຍ, ມຶງ ມັນປັນຍາປູ້ ເຂົ້ານຸ່ງສິ້ນແຕ່ນ້ອຍ ເຂົ້າກໍຂາວແລ້ວ, ລູກເຂີຍຫລ້າຈຶ່ງອ້າງເຫດຜົນວ່າ: ບາດດັ່ງພໍ່ເຖົ້າຫັ້ນເດຢູ່ໃນໂກນດັງພຸ້ນ ກໍຍັງດຳຫັ້ນເດ! ພໍ່ເຖົ້າກໍວ່າ : ໂອ! ແມ່ນຄວາມໂຕອີກແລ້ວ, ແລ້ວກໍພາກັນໄປບ່ອນໃຫມ່ອີກ. ພໍໄປເຫັນ ທ່ານຮ້ອງຢູ່ກໍຖາມບັນຫາອີກວ່າ: ທ່ານນີ້ເປັນຫຍັງຈຶ່ງຮ້ອງດັງແທ້? ລູກເຂີຍກືກ ກໍຕອບກ່ອນວ່າ: ຍ້ອນວ່າມັນຄໍຍາວແມ່ນບໍ່ພໍ່? ພໍ່ເຖົ້າກໍວ່າ: ແມ່ນແຫລະ ແລ້ວບັກຫລ້າເດ? ລູກເຂີຍຫລ້າກໍຕອບໄປວ່າ: ກໍເພາະທຳມະຊາດຂອງມັນແຫລະ ພໍ່ເຖົ້າຢາກຮ້າຍຈຶ່ງວ່າ: ມັນຄືທຳມະຊາດຫລາຍເທື່ອພໍ່ມຶງແທ້! ມຶງຄືຊິມີ ແຕ່ທຳມະຊາດຫັ້ນແຫລະເນາະຢູ່ໃນສະຫມອງຂອງມຶງ. ລູກເຂີຍຫລ້າຈຶ່ງແກ້ ບັນຫາໄປວ່າ: ບາດອຶ່ງຫັ້ນເດ ມັນຄໍສັ້ນໆມັນຍັງຮ້ອງດັງບໍ່ແມ່ນທຳມະຊາດບໍ ອັນນັ້ນ! ເມື່ອພໍ່ເຖົ້າຄິດເບິ່ງແລ້ວກໍເວົ້າວ່າ: ໂອ! ມັນປັນຍາດີ ຈຶ່ງຕົກລົງ ເຮັດ

ເຮືອນໃຫ້ມັນກ່ອນ. ມື້ຄ່ຳມາກໍພາລູກເຂີຍຫລາໄປເກັບຕອງມາໄວ້ເຮັດ ຝາເຮືອນ, ພໍຮອດກົກຕອງລູກເຂີຍຫລ້າກໍເວົ້າກັບພໍ່ເຖົ້າວ່າ: ມື້ນີ້ ລູກເຈັບ ທ້ອງໃຫ້ພໍ່ຂຶ້ນເອົາຕອງຖ້າແດ່ ລູກໄປຖ່າຍກ່ອນ. ເມື່ອພໍ່ເຖົ້າຂຶ້ນປິດຕອງລົງມາລູກເຂີຍກໍເກັບຕອງໃສ່ກະທໍ ແລ້ວກໍເຂົ້າລີ້ຢູ່ນຳຕອງ, ເມື່ອພໍ່ເຖົ້າລົງຈາກ ກົກຕອງແລ້ວກໍຮ້ອງຫາລູກເຂີຍ ແຕ່ມິດຈີ່ລີ້ຢູ່ ພໍ່ຢາກຮ້າຍຈຶ່ງເກັບຕອງໃສ່ທໍແລ້ວກໍຄອນເມືອເຮືອນ ພໍຮອດເຮືອນລູກເຂີຍກໍໂດດອອກຈາກທໍຕອງ, ພໍ່ເຖົ້າເຫັນແນວນັ້ນກໍຄຶດແຄ້ນຢູ່ໃນໃຈ, ຈຶ່ງຊອກຫາອຸບາຍເພື່ອແກ້ແຄ້ນໃຫ້ມັນຢ່າງແສບໆເຜັດໆ ໂລດລະບັກລູກເຂີຍນີ້, ຮອດມື້ໃຫມ່ມາ ພໍ່ເຖົ້າກັບລູກເຂີຍກໍພາກັນ ໄປເກັບຕອງອີກ ພໍຮອດກົກຕອງພໍ່ເຖົ້າກໍເວົ້າກັບລູກເຂີຍວ່າ:

ລູກເຂີຍໃຫ້ລູກຂຶ້ນເອົາຕອງສາເດີ ມື້ນີ້ພໍ່ເຈັບທ້ອງ ພໍ່ຈະໄປຖ່າຍ ກ່ອນວ່າແລ້ວ ລູກເຂີຍກໍຂຶ້ນກົກຕອງແລະເດັດໃບຕອງລົງມາທັງແນມເບິ່ງພໍ່ ເຖົ້າຈຶ່ງເຫັນພໍ່ເຖົ້າເຂົ້າລີ້ຢູ່ໃນທໍຕອງ ເມື່ອລົງມາກະວ່າພໍແລ້ວ ລູກເຂີຍກໍ ລົງຈາກກົກຕອງ ແລ້ວກໍຮ້ອງຫາພໍ່ເຖົ້າແລະຄິດໃນໃຈວ່າຈະເຮັດໃຫ້ພໍ່ເຖົ້າຕ້ອງຍອມລູກເຂີຍຫລ້າບາດນີ້ລະ, ຄັນຮ້ອງຫາບໍ່ໄດ້ຍິນສຽງຕອບຈຶ່ງເວົ້າຂຶ້ນ ວ່າ: ພໍ່ເຖົ້າບໍ່ແມ່ນເຈັບທ້ອງຈົນອາຈົມຖ້ວມຫົວລະບໍ? ຈັ່ງໃດກໍຕາມຢ້ານໃບ ຕອງແຫ້ງ; ຊິຟາວເມືອກ່ອນລະ ເມືອບອກແມ່ເຖົ້າມາຕາມຫາພໍ່ເຖົ້າ ວ່າແລ້ວ ກໍຄອນເອົາທໍຕອງກັບບ້ານ. ພໍຮອດກາງທາງພັດເຫັນຫນອງນ້ຳ, ລູກເຂີຍຈຶ່ງຈຶ່ມພຶມພຳຂຶ້ນວ່າ: ໂອ໋! ຢາກກິນນ້ຳເຮີຍ, ວ່າແລ້ວກໍປົດທໍຕອງລົງຈາກບ່າ, ມິດຢູ່ຄາວຫນຶ່ງ ຈຶ່ງຫ້ວງຂຶ້ນທັງແຮງວ່າ: ໂອ່! ຊ້າງ! ຊ້າງມາ ຊ້າງຊິຢຽບ ທໍຕອງ ແຕ່ປະກົດວ່າ ກະທໍຕອງກໍຍັງບໍ່ຕິງ, ລູກເຂີຍຈຶ່ງອອກອຸບາຍໃຫມ່ ໂດຍການຫ້ວງຄ່ອຍໆວ່າ: ໂອ່! ມື້ນີ້ແດດແຫ້ງເບິ່ງຕອງແຫ້ງຫມົດແລ້ວ, ວ່າ ແລ້ວລູກເຂີຍກໍເອົາທໍຕອງຖິ້ມລົງຫນອງນ້ຳ ພ້ອມທັງເວົ້າວ່າ: ເອົາຕອງແຊ່ ນ້ຳ

ກ່ອນ, ເມື່ອນັ້ນພໍ່ເຖົ້າກໍ່ໂດດຂຶ້ນມາຈາກທໍ່ຕອງພ້ອມທັງໄອ, ທັງຈາມສະ ນັ່ກນ້ຳຢູ່, ຊຽງ! ຊຽງ! . . . ແລະ ເຊັນຫນາວຢູ່ກັບກັບ. ດ້ວຍຄວາມຢາກຮ້າຍແລະຄຽດແຄ້ນແຫນ້ນໃຈຕໍ່ລູກເຂີຍ, ຕໍ່ແຕ່ນັ້ນມາພໍ່ເຖົ້າຈຶ່ງພະຍາຍາມຊອກຫາ ຊູບາຍຕໍ່ລູກເຂີຍແຕ່ເອົາຊະນະບໍ່ໄດ້ຈັກເທື່ອ, ຢູ່ຕໍ່ມາວັນຫນຶ່ງ, ພໍ່ເຖົ້າກໍນັ່ງກອດເຂົ່າເຫງົາຊຶກງຶກແລ້ວກໍເອົາກອກມາຍັດດູດຄວັນກຸ້ມຖ້ວມຫົວ ແລ້ວກໍຮ້ອງໃສ່ລູກເຂີຍວ່າ: ບັກລູກເຂີຍຫລ້າມານີ້, ຄັນລູກເຂີຍຫລ້າມາຮອດແລ້ວ ພໍ່ ເຖົ້າກໍເວົ້າວ່າ: ເອົາຈັ່ງຊີ້ ກູເຫັນວ່າມຶງມັນສະຫລາດເກີນໄປໂພດ, ກູກັບ ລູກເຂີຍກົກຈະເຮັດເຮືອນໃຫ້ມຶງ, ສ່ວນມຶງກັບເມຍມຶງໃຫ້ເຮັດໂຮງຫລັງຫນຶ່ງໃຫ້ກູ, ພວກເຮົາມາລອງເຮັດແຂ່ງກັນລອງເບິ່ງ, ຄັນກູກັບລູກເຂີຍກົກແລ້ວ ກ່ອນກູຈະໄລ່ມຶງຫນີ, ບໍ່ໃຫ້ມຶງເປັນເຂີຍຕໍ່ໄປອີກ, ຖ້າມຶງແລ້ວກ່ອນກູຈະມອບເຮືອນໃຫ້ມຶງ, ຄັນສັນຍາແລ້ວ ພໍ່ເຖົ້າກັບລູກເຂີຍກົກກໍໄປຕັດໄມ້ເຄື່ອງເຮືອນ ຢ່າງຟ້າວຟັ່ງ, ຮອດຍາມແລງ ກໍຫາມໄມ້ມາບ້ານດ້ວຍຄວາມອິດເມື່ອຍຈົນຫລັງຄົດຫລັງກົ່ງ, ສ່ວນລູກເຂີຍຫລ້າກໍຍິ້ມຢູ່ເສີຍຄືວ່າບໍ່ຮູ້ບໍ່ອື້ງຫຍັງຫມົດ ຄັນພໍ່ ເຖົ້າເຫັນດັ່ງນັ້ນ ຈຶ່ງຄິດວ່າລູກເຂີຍຫລ້າບໍ່ນັບຖືຕົນ ເບິ່ງຄືວ່າມັນເປັນການ ຢຽບຫຍາມນ້ຳໃຈກັນເກີນໄປ ຄິດໄດ້ແນວນີ້ຍິ່ງມີຄວາມກົ້ວໂກດໂກທາຫນັກ ຫນາຕື່ມ, ພໍ່ເຖົ້າອົດບໍ່ໄດ້ຕໍ່ພຶດຕິກຳຂອງລູກເຂີຍຫລ້າຈຶ່ງເວົ້າກະທົ່ງກະແທກ ໃສ່ວ່າ: ມຶງເປັນບ້າແລ້ວບໍ່ ມຶງຄືບໍ່ເຮັດຫຍັງເລີຍ ຫລືມຶງບໍ່ນັບຖືກູບໍ່? ກູຈະ ໄລ່ມຶງຫນີຈາກເຮືອນກູບາດນີ້ຄືກັນລະ, ເມື່ອເວລານັດຫມາຍຍັງເຫລືອພຽງ ວັນດຽວ, ພວກພໍ່ເຖົ້າກັບລູກເຂີຍກົກເຮັດເຮືອນກໍ່ແລ້ວຫມົດ ຍັງເຫລືອແຕ່ຂັ້ນໃດເທົ່ານັ້ນ, ລູກເຂີຍຫລ້າກໍເອົາໄມ້ມາຖາກເຈາະພຸ້ນ, ເຈາະພີ້ ປອກ! ປອກ ! ແປກ! ແປກ. . . ແລ້ວກໍປະກອບເປັນໂຮງກະບອງໄດ້ຫລັງຫນຶ່ງແລ້ວກໍ ຮ້ອງໄປໃສ່ພໍ່ເຖົ້າວ່າ: ພໍ່ ໆ ມາເບິ່ງແມ້ ລູກເຮັດໂຮງແລ້ວລະໃດ໋, ມາເອົາແມ້

ເມື່ອພໍ່ເຖົ້າມາເຫັນແຕ່ໂຮງກະບອງກໍ່ຮ້າຍຂຶ້ນປານຟືນປານໄຟ, ຈົນຫນ້າແດງຕາດຳ ແລ້ວລູກເຂີຍກໍເວົ້າວ່າ: ຖ້າພໍ່ເຖົ້າມີແຕ່ຮ້າຍກໍ່ຕົກລົງກັນຫຍັງບໍ່ ໄດ້ດອກ ຫລືພໍ່ເຖົ້າບໍ່ໄດ້ນັບຖືສັນຍາຕົນເອງບໍ່, ຄັນພໍ່ເຖົ້າບໍ່ນັບຖືສັດຈະ ແລ້ວເຫດໃດຈະເບິ່ງແຍງສັ່ງສອນລູກຫລານໃຫ້ກຸ້ມໃຫ້ຫຸ້ມໄດ້ ຫລືວ່າພໍ່ເຖົ້າ ຍອມຮັບໂຮງກະບອງບໍ່, ມື້ຄືນນີ້ພໍ່ເຖົ້າກໍຍັງໃຊ້ໃຫ້ລູກເອົາໂຮງມາໃຫ້ລູກກໍ ເອົາໂຮງກະບອງມາໃຫ້ພໍ່ກໍຂອບໃຈນຳລູກບໍ່ແມ່ນຫວະ? ຄັນພໍ່ບໍ່ແນ່ໃຈວ່າມັນແມ່ນໂຮງກໍ່ເອົາບັນຫາທັງຫມົດໄປໄຫວ້ພະຍານ້ອຍຜູ້ຮັກສາແຄ້ວນລອງເບິ່ງ. ຄັນເອົາບັນຫາທັງຫມົດໄປຫາພະຍານ້ອຍແລ້ວເພິ່ນກໍມິດຢູ່ຄາວຫນຶ່ງແລ້ວເວົ້າວ່າໂຮງກະບອງກໍໂຮງຄືກັນ ຖ້າພວກທ່ານບໍ່ກຳນົດວ່າໂຮງຫຍັງກໍສະແດງ ວ່າແມ່ນຄວາມລູກເຂີຍຫລ້າເຈົ້າຫັ້ນແລ້ວ ຫລືວ່າຈັ່ງໃດ? ພໍ່ເຖົ້າກໍອ່ອນ ແອ ! ແລະລົງປາຍພັກຫນຶ່ງແລ້ວເວົ້າວ່າ: ຂ້າແຕ່ອັນຍາສັນຍາບໍ່ໄດ້ກຳນົດ ຫຍັງຫມົດ, ພະຍາກໍເວົ້າຕໍ່ໄປວ່າ: ສະແດງວ່າໂຮງຕາມໃຈຜູ້ເຮັດ, ຖ້າຈະ ເຮັດໂຮງໃຫຍ່ໄປແຂ່ງກັບຫລາຍຄົນມັນກໍບໍ່ສົມກັນເມື່ອລູກເຂີຍສອງຜົວເມຍເທົ່ານັ້ນເມື່ອນັ້ນພະຍາເຫັນວ່າລູກເຂີຍຫລ້າມີສະຫມອງເຕັມບ່ຽມດ້ວຍປັນຍາຈຶ່ງຂໍເອົາໄປເປັນມະຫາອຸປະລາດຂອງຕົນ ແຕ່ນັ້ນ ຫັ້ນແລ!!!

# ນາງຈິກຜູ້ທຸກຈົນ

- ໂພໄຊ ເທບວິໄລວົງ

ແຕ່ກີ້ ແຕ່ກ່ອນ ຍັງມີຄອບຄົວໜຶ່ງ ມີພໍ່ແມ່ແລະລູກສາວຄົນໜຶ່ງຊື່ວ່ານາງຈິກ, ນາງຕ້ອງທຳງານ ບໍ່ວ່າວຽກຜູ້ຍິງ ຫລືວຽກຜູ້ຊາຍ, ເພາະພໍ່ຂອງ ນາງເປັນຄົນມີສຸຂະພາບອ່ອນເພຍ, ສາມມື້ດີ ສີ່ມື້ໄຂ້. ໃນທີ່ສຸດພໍ່ຂອງນາງກໍ່ ຕາຍຈາກໄປ. ຍັງເຫລືອແຕ່ສອງແມ່ລູກ ທີ່ຈະຕ້ອງທົນທຸກຕໍ່ໄປ.

ວັນເວລາໄດ້ຜ່ານໄປ, ວັນໜຶ່ງ ເສດຖີໄດ້ມາເຮືອນສອງແມ່ລູກແລະກ່າວວ່າ: ປານໃດ ເຈົ້າຈະນຳເອົາຄຳສາມບາດນັ້ນ ໄປຄືນໃຫ້ຂ້ອຍ. ເຈົ້າຢືມຄຳຈຳນວນນີ້ຕັ້ງແຕ່ຕອນຜົວເຈົ້າຕາຍພຸ້ນ, ນີ້ມັນກໍ່ຮອດເວລານັດໝາຍພໍດີ ແລ້ວເດ! ແມ່ຂອງນາງຈິກທັງໄຫ້ທັງເວົ້າວ່າ: ທ່ານເສດຖີເອີຍ! ຈະໃຫ້ຂ້ານ້ອຍເອົາຄຳນັ້ນມາແຕ່ໃສ? ຂ້ານ້ອຍໄປຢືມຄຳທ່ານມາ ກໍ່ເພື່ອມາມຽນຄາບ ສົ່ງສະການຜົວຂ້ານ້ອຍ.

- ຄັນຊັ້ນມຶງຕ້ອງໄປເປັນຄົນໃຊ້ກູດຽວນີ້. ກຳນົດເວລາສາມປີຈຶ່ງຈະ ໃຊ້ຄ່າຄຳສາມບາດກູໄດ້. ເວົ້າແລ້ວເສດຖີກໍ່ສັ່ງໃຫ້ທະຫານຈັບຕົວລາວໄປ.

- ຢຸດກ່ອນໄດ໋ ທ່ານເສດຖີ ! ແມ່ຂ້ານ້ອຍ ເຖົ້າຫລາຍແລ້ວເພິ່ນຈະໄປເຮັດວຽກໃຫ້ທ່ານໄດ້ແນວໃດ?

- ຄັນຊັ້ນ ເຈົ້າຈະເອົາຄຳສາມບາດນັ້ນແຕ່ໃສມາແທນເຮົາ?

- ຂ້ານ້ອຍຈະໄປເປັນຄົນຮັບໃຊ້ ແທນແມ່ຂ້ານ້ອຍເອງ!

ຈາກນັ້ນນາງຈິກກໍ່ສັ່ງລາແມ່ແລ້ວກໍ່ລົງເຮືອນໄປກັບເສດຖີ.

ຢູ່ທີ່ບ້ານຂອງເສດຖີ ນາງຕ້ອງຕື່ນແຕ່ເດິກໆ, ໜຶ້ງເຂົ້າແຕ່ເຊົ້າແລ້ວກໍ່ໄປລ້ຽງງົວ, ເວລາກັບຕ້ອງໄດ້ຫາບຟືນມາພ້ອມ, ເມື່ອກາງຄືນມາກໍ່ເຂັນຝ້າຍຈົນເດິກດື່ນທຸກຄືນ. ແຕ່ປານນັ້ນກໍ່ຍັງບໍ່ພໍໃຈເສດຖີແລະລູກສາວຂອງເພິ່ນ, ຢູ່ ມາວັນໜຶ່ງ, ນາງຈິກໄປລ້ຽງງົວ, ເຖິງຕອນກັບນາງຈຶ່ງຜ່າຟືນແລະຄິດວ່າ ຈະຫາບຟືນໄລ້ງົວເມືອແຫລ່ງ. ບັງເອີນໃນຂະນະທີ່ນາງຜ່າຟືນ ຂວານເລີຍຫລົ່ນອອກ. ນາງພະຍາຍາມຊອກຫາຂວານ ເລີຍໄປເຫັນງູເຫລືອມໃຫຍ່ໂຕ ໜຶ່ງ ງູໂຕນັ້ນກໍ່ເວົ້າກັບນາງວ່າ: ນາງເອີຍ! ຂວານເຈົ້າຢູ່ໃນປາກຂອງຂ້ອຍ ພີ້ ຖ້າເຈົ້າບໍ່ຕົກລົງຕາມຄຳຂອງເຮົາແລ້ວ, ເຮົາຈະບໍ່ຄືນຂວານນີ້ໃຫ້ເຈົ້າ ເດັດຂາດ.

- ພະຍາງູເອີຍ! ຂ້ານ້ອຍຈະເຮັດທຸກຢ່າງ, ຂໍແຕ່ທ່ານຄືນຂວານນັ້ນ ໃຫ້ຂ້ານ້ອຍ. ຖ້າບໍ່ໄດ້ຂວານນີ້ກັບເມືອ ເສດຖີຕ້ອງຂ້າຂ້ານ້ອຍຖິ້ມແທ້ໆ. ຈາກນັ້ນງູກໍ່ຄາຍຂວານອອກ ມາຈາກປາກແລ້ວເວົ້າວ່າ: ເຈົ້າຕ້ອງຮັບເອົາເຮົາເປັນຜົວ, ມື້ແລງນີ້ເຮົາຈະໄປຫາເຈົ້າຢູ່ທີ່ເຮືອນ. ຕໍ່ມາງູໂຕນັ້ນກໍ່ກຽວຂອນ ແລ້ວຮັດ, ເຮັດໃຫ້ໄມ້ນັ້ນແຕກອອກເປັນປ່ຽງໆ. ແລ້ວຕໍ່ມານາງຈິກກໍ່ມັດເອົາ ຟືນແລ້ວຂ້ຽວຫາບແລ່ນໄປຕາມກົ້ນງົວ. ປະກົດວ່າມື້ນັ້ນງົວພາກັນຍ່າງເຂົ້າ ຄອກເອງໂດຍທີ່ບໍ່ໄດ້ປ້ອງເລີຍ. ຕົກກາງຄືນມາ ນາງຈິກນັ່ງເຂັນຝ້າຍຢູ່ຄົນ ດຽວບໍ່ພໍຄາວປະຕູກໍ່ໄຂອອກ, ເຫັນຫົວງູດຸດເຂົ້າມາແລ້ວເລືອຂຶ້ນໄປເທິງບ່ອນນອນ ຈົນໃກ້ຈະແຈ້ງ ແລ້ວນາງບໍ່ຍອມເຂົ້ານອນ, ພະຍາງູຈຶ່ງກ່າວວ່າ: ນາງເອີຍ ປານໃດເຈົ້າຈະເຂົ້ານອນ?

- ຖ້າຂ້ອຍຫາກເຂັນຝ້າຍບໍ່ແລ້ວ, ທ່ານເສດຖີຈະຕີຂ້ອຍເພາະຂ້ອຍ ເປັນຄົນຮັບໃຊ້ເພິ່ນ.

- ຄັນຊຸນໃຫ້ເຈົ້າເອົາເງິນນີ້ເດໄປໃຫ້ເພິ່ນ ແລ້ວມື້ອື່ນພວກເຮົາກໍ່ພາກັນໜີໄປຈາກທີ່ນີ້. ພໍພະຍາງູເວົ້າສຸດ, ນາງຈິກກໍ່ຫລຽວໄປຫາ, ເຫັນງູສັ້ນ ເກັດອອກເປັນເກັດເງິນເກັດຄຳ, ຫລັງຈາກນັ້ນ ງູກໍ່ກັບກາຍເປັນຄົນ ຜູ້ຊາຍ ທີ່ມີຮູບຮ່າງອັນຈົບງາມ. ແລ້ວຊາຍຄົນນັ້ນກໍ່ກວາດເອົາເງິນຄຳໃສ່ຖົງຜ້ານ້ອຍ ໆ ມອບໃຫ້ນາງຈິກ ແລ້ວພວກເຂົາກໍ່ພາກັນເຂົ້ານອນ. ເຖິງຕອນເຊົ້ານາງ ຈິກແລະຊາຍຄົນນັ້ນກໍ່ເອົາເງິນແລະຄຳໄປໃຫ້ເສດຖີແລະລູກສາວຂອງ ເພິ່ນເມື່ອລູກສາວເສດຖີ ເຫັນຍິງຄົນນັ້ນໄດ້ຜົວຜູ້ງາມໆກໍ່ສົນໃຈຈຶ່ງຖາມເຖິງເຫດການແລະເລື່ອງລາວຕ່າງໆ. ສ່ວນນາງຈິກກໍ່ເລົ່າຄວາມຈິງໃຫ້ຟັງທຸກ ຢ່າງຈາກນັ້ນ ນາງຈິກແລະຜົວຂອງນາງຈຶ່ງພາກັນໄປຫາແມ່ແລະຢູ່ກິນສ້າງ ສາຣ່ວມກັນ. ສ່ວນລູກສາວເສດຖີກໍ່ຄິດຢາກໄດ້ຜົວງາມໆຄືຜົວຂອງນາງຈິກ ມັນຈຶ່ງບອກພໍ່ໃຫ້ສັ່ງທະຫານໄປຊອກຈັບງູມາໃຫ້. ເສດຖີກໍ່ປະກາດໃຫ້ຄົນ ອອກໄປຊອກຫາງູເຫລື້ອມໃຫ້. ໃນທີ່ສຸດພວກເຂົາກໍ່ຊອກໄດ້ ແລ້ວເອົາໄປຂັງ ໄວ້ຫ້ອງນອນຂອງລູກສາວເສດຖີ. ເມື່ອຄ່ຳມາກໍ່ໃຫ້ລູກສາວເພິ່ນເຂົ້າໄປ ນອນນຳງູ. ເດິກພໍປະມານ ກໍ່ໄດ້ຍິນສຽງລູກສາວເສດຖີຮ້ອງຫາພໍ່.

- ພໍ່ເອີຍ ! ງູກືນກິນຂອຍພຽງຫົວເຂົ່າແລ້ວ!
- ອົດເອົາລູກ ຜົວໃຫ່ມ ເມຍໃຫ່ມ.
- ພໍ່ເອີຍ! ງູກືນກິນຂ້ອຍພຽງແອວແລ້ວ!
- ອົດເອົາລູກ ຜົວໃຫ່ມເມຍໃຫ່ມ.
- ພໍ່ເອີຍ. ງູກືນກິນຂ້ອຍພຽງຄໍແລ້ວ!
- ອົດເອົາລູກ ຜົວໃຫ່ມ ເມຍໃຫ່ມ.

ຕໍ່ມາກໍ່ມິດສຽງເວົ້າ, ເສດຖີ ກໍ່ຄິດວ່າ ລູກສາວຕົນນອນແລ້ວຈຶ່ງບໍ່ ສົນໃຈເຖິງຕອນເຊົ້າມື້ໃຫ່ມ ສວາຍສົມຄວນແລ້ວລູກສາວຍັງບໍ່ຕື່ນ, ເສດຖີຈຶ່ງ ອອກ

ໄປສ່ອງເບິ່ງ, ແຕ້ຫອງນັ້ນຫວ່າງເປົ່າ, ເສດຖີຄິດແປກໃຈແລະຄິດວ່າງູນັ້ນກິນລູກສາວຕົນແລ້ວ ຈຶ່ງສັ່ງຄົນອອກໄປຕິດຕາມຫາງູ. ພວກເຂົາໄປພົບງູ ແຂວນຢູ່ເທິງງ່າໄມ້ ຈຶ່ງພ້ອມກັນຈັດການຂ້າງູຕົວນັ້ນ ແລ້ວປາດທ້ອງງູເອົາຊາກສົບລູກສາວເສດຖີອອກມາທຳພິທີ. ສ່ວນນາງຈິກພ້ອມດ້ວຍຜົວແລະແມ່ເມື່ອຮູ້ຂ່າວກ່ຽວກັບລູກສາວເສດຖີ ກໍ່ຈຶ່ງພາກັນມາງານສົບນັ້ນ.

ໃນທີ່ສຸດເສດຖີກໍ່ກ່າວວ່າ: ມັນຍ້ອນຄວາມອິດສາພະຍາບາດ, ຄວາມຢ້ານລື້ນຢ້ານເຫລືອ ແລະຄວາມມັກໃຫ່ຍໄຝ່ສູງຂອງຂ້ອຍແລະລູກສາວແທ້ ໆ ຂ້ອຍຈຶ່ງພົບກັບຄວາມໂສກເສົ້າແລະເສຍໃຈເຊັ່ນນີ້.

# ສາລະບານ


ໜ້າ

- ນົກເຈົ່າໄດ້ຜົວແມວ 1
- ທ້າວໝາກແຕງສຸກ 5
- ນາງນ້ອຍໃນດວງເດືອນ 11
- ກຳພ້າປາຫລິດ 14
- ຊາຍຫູຫ້ຽນ 18
- ກຳພ້າໄຂ່ຫ່ານ 22
- ນາງຫລ້າ 26
- ກຳພ້າປາບຍັກ 32
- ລີກປາກບອນ 35
- ເຂີຍຫລ້າປັນຍາແຫລມ 39
- ນາງຈິກຜູ້ທຸກຈົນ 44

## ບໍລິສັດ ແຊນ ເຮັດທຸລະກິດ ໃນ ສ.ປ.ປ.ລາວ

## ສົ່ງເສີມ ການສຶກສາ ເພື່ອ ພັດທະນາ ປະເທດຊາດ.

ການສຶກສາແມ່ນສິ່ງຈຳເປັນສຳລັບທຸກຄົນ ເພື່ອປະສົບຜົນສຳເລັດໃນການສ້າງ ຊີວິດ ຂອງ ຕົນໃຫ້ແຈ່ມໃສຂຶ້ນ.

ແຊນ ປະກອບສ່ວນຊ່ວຍ ໃນການສົ່ງເສີມການສຶກສາ ໃນທຸກຮູບການ ແລະ ທຸກລະດັບ.

ແຊນ ແບ່ງທຶນຮອນ ແລະຄວາມຊຳນິຊຳນານໃຫ້ຫລາຍສະຖາບັນການສຶກສາ.ປື້ມອ່ານ ແລະ ຟິມຮູບເງົາທີ່ ແຊນ ຊ່ວຍສ້າງເປັນທີ່ຮູ້ຈັກຢ່າງກວ້າງຂວາງ ໃນທົ່ວໂລກ.

ແຊນ ຮູ້ສຶກພາກພູມໃຈ ທີ່ໄດ້ເປັນອົງປະກອບ ສຳຄັນສ່ວນໜຶ່ງໃນການສ້າງສາ ພັດທະນາ ສ.ປ.ປ.ລາວ .

ບໍລິສັດ ແຊນ ແຫ່ງປະເທດລາວ ໂທ: 214142, 212842

ພິມທີ່ໂຮງພິມ ນະຄອນຫຼວງ ວຽງຈັນ